ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ມິຖຸນາ 2023
ປີທີ 12
ສະບັບທີ 926
ລາຍສັປປະດາ


## ປະທານສະພາແຫ່ງຊາດ ຊຸກຍູ້ໂຄງການພັດທະນາແຫຼ່ງທ່ອງທ່ຽວ ຢູ່ແຂວງວຽງຈັນ



(ສພຊ) ວັນທີ 2 ມິຖຸນາຜ່ານມານີ້, ທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ທ່ານ ຄຳພັນ ສິດທິດຳພາ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງວຽງຈັນ ພ້ອມດ້ວຍຄະນະ ໄດ້ລົງຕິດຕາມຊຸກຍູ້ໂຄງການພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກອ່າງນ້ຳງື່ມ 1 ເມືອງແກ້ວອຸດົມ ແຂວງວຽງຈັນ ເຊິ່ງໂຄງການດັ່ງກ່າວແມ່ນໄດ້ຮັບການສະໜັບໜູນຈາກທະນາຄານພັດທະນາອາຊີ (ADB), ເປົ້າໝາຍເພື່ອພັດທະນາເຂດດັ່ງກ່າວໃຫ້ກາຍເປັນຈຸດໝາຍປາຍທາງຂອງນັກທ່ອງທ່ຽວ ແລະ ເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໃນທ້ອງຖິ່ນດັ່ງກ່າວ.

ຈາກນັ້ນ, ຕາງໜ້າບໍລິສັດຄຳຟອງກຣຸບຈຳກັດຜູ້ດຽວ ໄດ້ລາຍງານວ່າ: ມາຮອດປັດຈຸບັນ ໂຄງການພັດທະນາພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ອ່າງນ້ຳງື່ມ 1 ແມ່ນມີຄວາມຄືບໜ້າ 54,23% ເຊິ່ງເຫັນວ່າມີຫຼາຍໜ້າວຽກມີຄວາມຄືບໜ້າ ໂດຍສະເພາະແມ່ນການກໍ່ສ້າງເສັ້ນທາງເຂົ້າໄປຫາເຂດທ່ອງທ່ຽວອ່າງນ້ຳງື່ມໃກ້ຈະສຳເລັດ 100% ເຊິ່ງໄດ້ປັບປຸງເສັ້ນທາງຈາກທາງປູຢາງເປັນທາງເບຕົງ ເຊິ່ງມີຄວາມຍາວ6ກິໂລແມັດ,ກວ້າງ 6 ແມັດ ແລະ ໜາ 17 ຊັງຕີແມັດ, ປັບປຸງທ່າຈອດເຮືອເຂດມາລີນາເຊິ່ງມີເນື້ອທີ່ 22.689 ຕາແມັດ; ນອກນີ້, ແມ່ນການເຮັດກະຕ່າຫີນກັນເຈື່ອນລຽບແຄມນ້ຳງື່ມ ແລະ ໜ້າວຽກອື່ນໆ; ພ້ອມດຽວກັນນັ້ນ, ປະທານສະພາແຫ່ງຊາດ ແລະ ເຈົ້າແຂວງ ໄດ້ຮ່ວມກັນປູກຕົ້ນໄມ້ເນື່ອງໃນໂອກາດວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ ທີ 1 ມິຖຸນາ ຢູ່ສະຖານທີ່ທ່ອງທ່ຽວກ້ອງເຂື່ອນນ້ຳງື່ມ 1.

ໃນໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ເຄື່ອນໄຫວຊຸກຍູ້ ແລະ ຢ້ຽມຢາມໂຄງການພັດທະນາເຂດຈຸດສຸມການຜະລິດກະສິກຳ, ປູກຝັງ, ລ້ຽງສັດ ຕິດພັນກັບການທ່ອງທ່ຽວ ຢູ່ບ້ານນ້ຳໂທ່ມ ເມືອງຫີນເຫີບ ແຂວງວຽງຈັນ, ມີທ່ານ ດາວເຮືອງ ບັນທະວົງ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງວຽງຈັນ

ອ່ານຕໍ່ໜ້າ 2

## ຂ່າວໜ້າໃນ




ພົບປະທາງໄກ...

(ໜ້າ 3)




ຄະນະສະມາຊິກ...

(ໜ້າ 3)




ເຫດຮ້າຍທີ່ກະທົບຕໍ່ສິດທິຂອງເດັກ

(ໜ້າ 12)


## ຮອງປະທານສະພາແຫ່ງຊາດ ຕ້ອນຮັບທູດສິງກະໂປ ເຂົ້າຢ້ຽມອຳລາ



(ສພຊ) ວັນທີ 31 ພຶດສະພາ 2023, ທີ່ສະພາແຫ່ງຊາດ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປ ລາວ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາຂອງທ່ານ ນາງ ລິວ ຊູນ ລົນ Leow Siu Lon ເອກອັກຄະລັດຖະທູດຜູ້ມີອຳນາດເຕັມແຫ່ງ ສາທາລະນະລັດ ສິງກະໂປ ປະຈຳ ສປປ ລາວ ໃນໂອກາດທີ່ສຳເລັດການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ກ່າວສະແດງຄວາມຕ້ອນຮັບຢ່າງອົບອຸ່ນ ແລະ ຊົມເຊີຍຜົນສຳເລັດໃນການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ ພ້ອມທັງຕີລາຄາສູງຕໍ່ການປະຕິບັດໜ້າທີ່ການທູດຂອງທ່ານ

ອ່ານຕໍ່ໜ້າ 3

## ພົບປະເຮັດວຽກ ລະຫວ່າງຮອງປະທານສະພາແຫ່ງຊາດລາວ ແລະ ປະທານຄະນະກຳມະການປ້ອງກັນການປະຕິວັດກູບາ



(ສພຊ) ທີ່ຫໍສະພາແຫ່ງຊາດ, ໃນວັນທີ 25 ພຶດສະພາ 2023, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບລາວ-ກູບາ, ປະທານຄະນະມິດຕະພາບລັດຖະສະພາລາວ-ກູບາ ໄດ້ພົບປະກັບສະຫາຍ Gerardo Hernandez Nordelo ກຳມະການສູນກາງພັກກອມມູນິດກູບາ, ປະທານຄະນະກຳມະການປ້ອງກັນການປະຕິວັດກູບາ ແຫ່ງ ສ. ກູບາ ເຊິ່ງມີບັນດາສະຫາຍສະມາຊິກສະມາຄົມມິດຕະພາບລາວ-ກູບາ; ບັນດາສະຫາຍກຳມະການຄະນະມິດຕະພາບລັດຖະສະພາລາວ-ກູບາ ຂອງສະພາແຫ່ງຊາດລາວ; ຄະນະນຳບັນດາກຳມາທິການ, ບັນດາຄະນະ

ອ່ານຕໍ່ໜ້າ 2

## ຝຶກອົບຮົມວຽກງານເລຂານຸການ ໃຫ້ແກ່ເລຂາການນຳພາຍ ໃນສະພາແຫ່ງຊາດ




(ສພຊ) ກອງປະຊຸມຝຶກອົບຮົມວຽກງານເລຂານຸການ ໃຫ້ແກ່ເລຂາການນຳພາຍໃນສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 3-5 ມິຖຸນາ 2023 ທີ່ເມືອງວັງວຽງ ແຂວງວຽງຈັນ, ໂດຍການເປັນປະທານກອງປະຊຸມຂອງທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການສະພາແຫ່ງຊາດ; ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ; ມີທ່ານຮອງເລຂາທິການສະພາແຫ່ງຊາດ, ນັກວິທະຍາກອນ

ອ່ານຕໍ່ໜ້າ 4

## ພິທີມອບຫຼຽນລາງວັນດີເດັ່ນ ໃນການອອກກົດໝາຍ



(ສພຊ) ວັນທີ 31 ພຶດສະພາ 2023 ທີ່ຫໍສະພາແຫ່ງຊາດຫຼັງໃໝ່ ໄດ້ມີພິທີມອບຫຼຽນລາງວັນດີເດັ່ນໃນການອອກກົດໝາຍ ແລະ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມຢາສູບຈາກອົງການອະນາໄມໂລກ ໃຫ້ແກ່ກຳມາທິການວັດທະນະທຳ-ສັງຄົມຂອງສະພາແຫ່ງຊາດ ໂດຍຕາງໜ້າອົງການອະນາໄມໂລກ ປະຈຳ ສປປ ລາວ ແມ່ນທ່ານ ນາງ ດຣ. ໂລ ຢິງ ຣູ ແຈັກກະລິນ ມອບໃຫ້ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ເຂົ້າຮ່ວມເປັນສັກຂີພິຍານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ຜູ້ຊີ້ນຳກຳມາທິການວັດທະນະທຳ-ສັງຄົມ

ອ່ານຕໍ່ໜ້າ 4

## ກອງປະຊຸມເພື່ອເອກະພາບບັນດາຄາດໝາຍ ດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ




(ສພຊ) ເພື່ອເປັນການຮັບປະກັນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງລັດຖະບານ ແລະ ທ້ອງຖິ່ນໄດ້ຮັບການຈັດຕັ້ງປະຕິບັດລວງດຽວກັນ ແລະ ມີຄວາມສະດວກໃນການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນວັນທີ 6 ມິຖຸນາ 2023 ທີ່ສະພາແຫ່ງຊາດ, ກຳມາທິການບັນດາເຜົ່າ ໄດ້ຈັດກອງປະຊຸມເພື່ອເອກະພາບບັນດາຄາດໝາຍດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກປະຈຳປີ 2023 (ໃນຮູບແບບທາງໄກ) ໂດຍການເປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ປະທານກຳມາທິການ

ອ່ານຕໍ່ໜ້າ 4

## ປະທານສະພາ...

(ຕໍ່ຈາກໜ້າ 1)



ພ້ອມດ້ວຍຄະນະ.

ໃນພິທີ, ທ່ານ ທອງໄລ ຈັນມະວົງ ປະທານບໍລິສັດ ສົມສະຫວ່າງຟາມ ຈຳກັດຜູ້ດຽວ ໄດ້ລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກຂອງໂຄງການໃນໄລຍະຜ່ານມາວ່າ: ອີງໃສ່ແນວທາງນະໂຍບາຍຂອງພັກ ແລະ ລັດ ກ່ຽວກັບການສົ່ງເສີມວຽກງານການຜະລິດກະສິກຳ ຕິດພັນກັບການທ່ອງທ່ຽວ ແບບອະນຸຮັກທຳມະຊາດ ດັ່ງນັ້ນ, ບໍລິສັດ ຈຶ່ງໄດ້ຕັດສິນໃຈລົງສຳຫຼວດພື້ນທີ່ຕົວຈິງ ໃນຂອບເຂດເມືອງສັງທອງ ແລະ ເມືອງຫີນເຫີບ ຜ່ານການສຳຫຼວດຕົວຈິງເຫັນວ່າ ເຂດດັ່ງກ່າວມີຄວາມເໝາະສົມ ແລະ ເອື້ອອຳນວຍຄວາມສະດວກຫຼາຍດ້ານ ສະພາບດິນຟ້າອາກາດ, ມີແຫຼ່ງນ້ຳທຳມະຊາດໄຫຼຕະຫຼອດປີ, ພື້ນທີ່ດິນມີຄວາມອຸດົມສົມບູນໄປດ້ວຍພູຜາປ່າໄມ້, ພູເຂົາເກາະກ່າຍສະຫຼັບສັບຊ້ອນ ມີຄວາມສວຍງາມ ເໝາະສົມແກ່ການພັດທະນາເປັນແຫຼ່ງທ່ອງທ່ຽວແບບອະນຸຮັກທຳມະຊາດ ໃນເນື້ອທີ່ດິນທີ່ສຳຫຼວດໄດ້ ຈຳນວນ 1.100 ເຮັກຕາ ບໍລິສັດໄດ້ຊຸດເຊີຍກຳມະສິດນຳໃຊ້ທີ່ດິນໃຫ້ແກ່ປະຊາຊົນສຳເລັດຈຸດປະສົງຂອງໂຄງການແມ່ນເພື່ອພັດທະນາທາງດ້ານການຜະລິດກະສິກຳ, ປູກຝັງ, ລ້ຽງສັດ ຕິດພັນການທ່ອງທ່ຽວແບບອະນຸຮັກທຳມະຊາດ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນຜູ້ທີ່ວ່າງງານ, ຮັບປະກັນສະບຽງອາຫານ ແລະ ຫຼຸດຜ່ອນການນຳເຂົ້າສິນຄ້າກະສິກຳຈາກຕ່າງປະເທດ. ມູນຄ່າການລົງທຶນຄາດຄະເນທັງໝົດ 1.000 ຕື້ກີບ ໄລຍະເວລາການກໍ່ສ້າງໂຄງການໃຫ້ສຳເລັດ 7 ປີ ນັບແຕ່ທ້າຍປີ 2019 ຮອດປັດຈຸບັນ ສາມາດປະຕິບັດໄດ້ 40% ມີມູນຄ່າເທົ່າກັບ 400 ຕື້ກີບ,ໂດຍໄດ້ນຳໃຊ້ເຂົ້າໃນການບຸກເບີກ, ກໍ່ສ້າງເສັ້ນທາງເຂົ້າຫາໂຄງການ ແລະພາຍໃນໂຄງການສຳເລັດ, ບຸກເບີກຈັດສັນພື້ນທີ່ໄດ້ 1.100 ເຮັກຕາ, ກໍ່ສ້າງອ່າງເກັບນ້ຳຂະໜາດໃຫຍ່ເພື່ອຮັບໃຊ້ການຜະລິດໄດ້ 4 ອ່າງ, ກໍ່ສ້າງລະບົບຊົນລະປະທານ (ເໝືອງຝາຍ), ກໍ່ສ້າງຄອກລ້ຽງສັດ; ນອກນັ້ນ, ທາງບໍລິສັດຍັງມີແຜນສືບຕໍ່ພັດທະນາໂຄງການໃນອະນາຄົດ ເຊິ່ງຈະຂະຫຍາຍເນື້ອທີ່ 500 ເຮັກຕາ, ສືບຕໍ່ສ້າງອາຄານ, ເຮືອນພັກ, ໂຮງແຮມ, ຮ້ານອາຫານ, ໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບໍລິສັດທີ່ໄດ້ມີຄວາມຕັດສິນໃຈສູງລົງທຶນພັດທະນາເຂດໂຄງການດັ່ງກ່າວນີ້ ແລະ ໄດ້ແນະນຳໃຫ້ບໍລິສັດຕ້ອງໄດ້ມີແຜນການໃຫ້ລະອຽດ, ເອົາໃຈໃສ່ທາງດ້ານວິຊາການ ແລະ ການຕະຫຼາດ ພ້ອມທັງການຮັກສາສິ່ງແວດລ້ອມ, ໃຫ້ປະຊາຊົນໄດ້ມີສ່ວນຮ່ວມຫຼາຍຂຶ້ນຕື່ມອີກ.

## ເລື່ອງເດັ່ນ ຂ່າວເດັດ

*# ຄັດໂດຍ: ທອມສະນິດ*

*❒ ໃນໄລຍະ 4 ເດືອນຕົ້ນປີ 2023 ມີນັກທ່ອງທ່ຽວເຂົ້າມາລາວ ປະມານ 1.114.000 ກວ່າຄົນ, ໃນນັ້ນ, ບັນດາປະເທດອາຊຽນ 694.000 ກວ່າຄົນ, ຂົງເຂດອາຊີປາຊີຟິກ 300.000 ກວ່າຄົນ, ເອີຣົບ 78.000 ກວ່າຄົນ; ອາເມລິກາ 31.000 ກວ່າຄົນ; ອາຟຣິກາ ແລະ ອື່ນໆ 4.000 ກວ່າຄົນ. ສະເພາະໃນອາຊຽນ ນັກທ່ອງທ່ຽວຊາວໄທຍັງເປັນກຸ່ມນັກທ່ອງທ່ຽວທີ່ເຂົ້າມາລາວຫຼາຍກວ່າຊາດອື່ນເກືອບ500.000 ຄົນ; ຫວຽດນາມ 244.000 ຄົນ. ນອກຈາກນັ້ນ, ຍັງມີນັກທ່ອງທ່ຽວຈາກຈີນ 223.000 ກວ່າຄົນ, ສ ເກົາຫຼີ 57.000 ຄົນ ແລະ ອາເມຣິກາ 22.000 ກວ່າຄົນ ເຊິ່ງຕາມແຜນຂອງກະຊວງ ຖວທ ໄດ້ລາຍງານວ່າ: ລັດຖະບານຈະສູ້ຊົນດຶງດູດ ແລະ ຍາດແຍ່ງເອົານັກທ່ອງທ່ຽວເຂົ້າມາປະເທດໃຫ້ໄດ້ 2 ລ້ານກວ່າຄົນພາຍໃນປີ 2023 ນີ້.*

***ໜສພ. ປະເທດລາວ 01/06/2023***

*❒ ອົງການກວດສອບແຫ່ງລັດ ໃຫ້ຮູ້ວ່າ: ປີ 2022 ການດຳເນີນການກວດສອບເອກະສານລາຍງານການເງິນ ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຜົນການຈັດຕັ້ງປະຕິບັດແຕ່ລະເປົ້າໝາຍ ສຳເລັດຜົນຕາມແຜນການທີ່ກຳນົດໄວ້ແຜນການ 108 ເປົ້າໝາຍ ປະຕິບັດໄດ້ 101 ເປົ້າໝາຍ; ໃນນັ້ນ, ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ 33 ເປົ້າໝາຍ ໂຄງການລົງທຶນຂອງລັດ 23 ເປົ້າໝາຍ ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ 19 ເປົ້າໝາຍ ວິສາຫະກິດລັດ 20 ເປົ້າໝາຍ ແລະ ທະນາຄານທຸລະກິດລັດລົງທຶນ 6 ເປົ້າໝາຍ; ສຳລັບປີ 2023 ແມ່ນຈະໄດ້ປະຕິບັດຕາມພາລະບົດບາດ ສິດ ແລະ ໜ້າທີ່ຂອງຕົນ ດຳເນີນການກວດສອບ 103 ເປົ້າໝາຍ.*

***ໜສພ. ວຽງຈັນໃໝ່ 02/06/2023***

## ພົບປະ...

(ຕໍ່ຈາກໜ້າ 1)



ກົມທີ່ກ່ຽວຂ້ອງຂອງສະພາແຫ່ງຊາດຈຳນວນໜຶ່ງ, ຄະນະຕິດຕາມສະຫາຍປະທານຄະນະກຳມະການປ້ອງກັນການປະຕິວັດກູບາ ແລະ ພາກສ່ວນກ່ຽວຂ້ອງຂອງສອງຝ່າຍເຂົ້າຮ່ວມ.

ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ສະແດງຄວາມຍິນດີຕ້ອນຮັບ ສະຫາຍ Gerardo Hernandez Nordelo ພ້ອມດ້ວຍຄະນະ ພ້ອມທັງຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ໃນຄັ້ງນີ້, ເປັນການຢ້ຽມຢາມທີ່ມີຄວາມໝາຍຄວາມສຳຄັນ ແລະ ເປັນການປະກອບສ່ວນສຳຄັນໃນການສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການພົວພັນຮ່ວມມືຖານອ້າຍນ້ອງທີ່ຮ່ວມອຸດົມການດຽວກັນ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງປະເທດລາວ-ກູບາ.

ໃນໂອກາດດັ່ງກ່າວ, ສະຫາຍ Gerardo Hernandez Nordelo ໄດ້ສະແດງຄວາມຂອບໃຈຢ່າງສູງຕໍ່ການຕ້ອນຮັບຢ່າງອົບອຸ່ນ ຂອງສະຫາຍຮອງປະທານສະພາແຫ່ງຊາດລາວພ້ອມທັງຕີລາຄາສູງຕໍ່ການຮ່ວມມືລະຫວ່າງສອງປະເທດກູບາ-ລາວ ໃນໄລຍະຜ່ານມາ; ພ້ອມກັນນີ້, ຍັງໄດ້ແຈ້ງໃຫ້ຊາບໂດຍຫຍໍ້ກ່ຽວກັບບາງບົດຮຽນ, ປະສົບການໃນການປົກປ້ອງໝາກຜົນການປະຕິວັດກູບາໃນໄລຍະໃໝ່ ແລະ ສະພາບການພັດທະນາເສດຖະກິດ-ສັງຄົມທີ່ພົ້ນເດັ່ນຂອງກູບາ, ທິດທາງການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງສອງປະເທດກູບາ-ລາວໃນຕໍ່ໜ້າ ກໍຄືສອງອົງການນິຕິບັນຍັດ ແລະ ປະຊາຊົນສອງຊາດ.

ໃນການພົບປະຄັ້ງນີ້, ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ແຈ້ງໃຫ້ຊາບໂດຍສັງເຂບກ່ຽວກັບສະພາບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ທັງແຈ້ງໃຫ້ຊາບວ່າ: ສະພາແຫ່ງຊາດລາວພວມກະກຽມການເປັນເຈົ້າພາບກອງປະຊຸມສຸດຍອດລັດຖະສະພາກຳປູເຈຍ-ລາວ-ຫວຽດນາມ (CLV) ຄັ້ງທີ 1 ໃນທ້າຍປີ 2023 ແລະ ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ 45 (AIPA) ໃນປີ 2024; ສະຫາຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືສອງຝ່າຍໃນໄລຍະຜ່ານມາ ເຫັນວ່າພັກ, ລັດຖະບານ ແລະ ປະຊາຊົນກູບາ ກໍໄດ້ໃຫ້ການສະໜັບສະໜູນອັນລ້ຳຄ່າແກ່ພັກ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ຕະຫຼອດໄລຍະຜ່ານມາ, ນັບແຕ່ໄລຍະຕໍ່ສູ້ເພື່ອປົດປ່ອຍປະເທດຊາດ ກໍຄືໄລຍະແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ;ສະຫາຍໄດ້ຢືນຢັນຄືນວ່າ, ພັກ, ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ຈະສືບຕໍ່ເຮັດສຸດຄວາມສາມາດຂອງຕົນຮ່ວມກັບພັກ, ລັດຖະບານ ແລະ ປະຊາຊົນກູບາອ້າຍນ້ອງໃນການປົກປັກຮັກສາ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມທີ່ເປັນມູນເຊື້ອມາແຕ່ດົນນານ ລະຫວ່າງສອງປະເທດ ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ ເພື່ອຜົນປະໂຫຍດຂອງປະຊາຊົນສອງຊາດກໍຄື ເພື່ອສັນຕິພາບ, ມິດຕະພາບ ແລະ ການພັດທະນາແບບຍືນຍົງໃນພາກພື້ນ ແລະ ໃນໂລກ; ພ້ອມດຽວກັນນີ້, ຍັງຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດອຳນາດປະຊາຊົນກູບາ ໃນໄລຍະຜ່ານມາ ເຊິ່ງໄດ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນລະດັບປະທານສະພາ ແລະ ຄະນະມິດຕະພາບລັດຖະສະພາລາວ-ກູບາ; ການຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດລາວ ແລະ ກູບາ, ສອງສະພາແຫ່ງຊາດລາວ ແລະ ກູບາ ໄດ້ລົງນາມບົດບັນທຶກຊ່ວຍຈຳ (MOU) ວ່າດ້ວຍການຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດນຳກັນ ແລະ ມີການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ສິ່ງສານຊົມເຊີຍ, ສານອວຍພອນເຊິ່ງກັນແລະກັນ ໃນໂອກາດວັນສຳຄັນຂອງຊາດ ແລະ ສະໜັບສະໜູນກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

ທັງສອງຝ່າຍໄດ້ຕົກລົງເປັນເອກະພາບຕໍ່ທິດທາງການຮ່ວມມືໃນຕໍ່ໜ້າ ໂດຍຈະສືບຕໍ່ເພີ່ມທະວີ ແລະ ຮັດແໜ້ນການພົວພັນຮ່ວມມືໃນດ້ານຕ່າງໆ ໂດຍສະເພາະສືບຕໍ່ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນໃນຂັ້ນຕ່າງໆຂອງສອງສະພາແຫ່ງຊາດ; ຈັດຕັ້ງປະຕິບັດບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມື ລະຫວ່າງ ສອງອົງການນິຕິບັນຍັດ, ຈັດຕັ້ງຜັນຂະຫຍາຍຜົນການຢ້ຽມຢາມ, ຜົນການພົບປະ ແລະ ຜົນກອງປະຊຸມທາງໄກຕ່າງໆໃຫ້ປາກົດຜົນເປັນຈິງ; ສືບຕໍ່ສະໜັບສະໜູນ ແລະ ຮ່ວມມືກັນໃນການເຄື່ອນໄຫວໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງໃນພາກພື້ນ ແລະ ສາກົນ; ຊຸກຍູ້ໃຫ້ສອງລັດຖະບານຂອງສອງປະເທດ ໄດ້ຈັດຕັ້ງປະຕິບັດບັນດາສັນຍາ-ສົນທິສັນຍາ ແລະ ນິຕິກຳທີ່ໄດ້ລົງນາມຮ່ວມກັນໃຫ້ເປັນຮູບປະທຳ ເພື່ອນຳເອົາຜົນປະໂຫຍດມາໃຫ້ສອງປະເທດຢ່າງແທ້ຈິງ.

**(ນາງ ກຸກກິກ ບຸດດາໄຊ, ນາງ ປາກາລັກ ພົມມີໄຊ)**

# ພົບປະທາງໄກລະຫວ່າງລັດຖະສະພາໜຸ່ມ ສະພາແຫ່ງຊາດລາວ ແລະ ລັດຖະສະພາໜຸ່ມຣັດເຊຍ

(ສພຊ) ໃນທ້າຍເດືອນພຶດສະພາຜ່ານມາ, ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມພົບປະທາງໄກ ລະຫວ່າງ ຄະນະສະມາຊິກສະພາໜຸ່ມ ສະພາແຫ່ງຊາດລາວ ແລະ ຄະນະສະມາຊິກລັດຖະສະພາໜຸ່ມຣັດເຊຍ ສະພາສູງຣັດເຊຍ. ຝ່າຍລາວນຳໂດຍທ່ານ ແກ້ວຈະເລີນ ເຊ່ຍຢື້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ ທັງເປັນປະທານຄະນະສະມາຊິກສະພາໜຸ່ມຂອງສະພາແຫ່ງຊາດລາວ ພ້ອມດ້ວຍຄະນະເຂົ້າຮ່ວມ; ຈຸດປະສົງກໍເພື່ອແລກປ່ຽນບົດຮຽນໃນຂົງເຂດການສ້າງກົດໝາຍວ່າດ້ວຍຊາວໜຸ່ມລາວ ແລະ ຣັດເຊຍ ແລະ ເພື່ອຣັດແໜ້ນສາຍພົວພັນໃນກອບສອງຝ່າຍໃຫ້ເປັນຮູບປະທຳຍິ່ງຂຶ້ນ ເຊິ່ງການພົບປະໃນຄັ້ງນີ້ຈະເປັນໂອກາດດີໃນການເປີດໂອກາດໃຫ້ສອງຄະນະສະມາຊິກລັດຖະສະພາໜຸ່ມ ສະພາແຫ່ງຊາດລາວ ແລະ ສະພາສູງຣັດເຊຍ ໄດ້ມີການແລກປ່ຽນບົດຮຽນຕ່າງໆທີ່ສອງຝ່າຍມີຄວາມສົນໃຈນຳກັນ ກ່ຽວກັບຊາວໜຸ່ມໄວໜຸ່ມ.



ໂອກາດນີ້, ທ່ານ ແກ້ວຈະເລີນເຊ່ຍຢື້ງຢ່າງ ໄດ້ສະແດງຄວາມຮູ້ສຶກເປັນກຽດ ແລະ ພາກພູມໃຈເປັນຢ່າງຍິ່ງ ທີ່ໄດ້ຕາງໜ້າຄະນະສະມາຊິກສະພາແຫ່ງຊາດໜຸ່ມ ຂອງສະພາແຫ່ງຊາດລາວ ເຂົ້າຮ່ວມກອງປະຊຸມສຳມະນາພົບປະຮ່ວມກັບຄະນະສະມາຊິກລັດຖະສະພາໜຸ່ມຣັດເຊຍ ອັນເປັນຄັ້ງປະຫວັດສາດທີ່ສອງຄະນະສະມາຊິກສະພາແຫ່ງຊາດໜຸ່ມ ໄດ້ມາພົບປະກັນ ໂດຍຜ່ານລະບົບອອນລາຍ ພາຍຫຼັງທີ່ແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດໜຸ່ມຂອງສະພາແຫ່ງຊາດ ຊຸດທີ IX ໃນທ້າຍປີ 2022 ຜ່ານມາ, ພ້ອມທັງແຈ້ງໃຫ້ຊາບເຖິງພາລະບົດບາດ ແລະ ໜ້າທີ່ ຂອງຄະນະສະມາຊິກສະພາແຫ່ງຊາດໜຸ່ມຂອງລາວ ແລະ ສະພາແຫ່ງຊາດລາວ; ພ້ອມດຽວກັນນັ້ນ, ຄະນະຜູ້ແທນຝ່າຍລາວ ຍັງສະເໜີບົດແລກປ່ຽນກ່ຽວກັບກົດໝາຍວ່າດ້ວຍຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ການຈັດຕັ້ງປະຕິບັດກົດໝາຍ ຂອງ ສປປ ລາວ ໃນໄລຍະຜ່ານມາ ກໍຄືແຜນການຕໍ່ໜ້າ.

ໃນພົບປະຄັ້ງນີ້, ຝ່າຍຣັດເຊຍແມ່ນນຳໂດຍທ່ານ Andrei RAZZORENOV ປະທານກຳມາທິການວຽກງານການຕ່າງປະເທດ, ຄະນະສະມາຊິກລັດຖະສະພາໜຸ່ມ ສະພາສູງ ແຫ່ງຣັດເຊຍ ໃນນາມເປັນປະທານກອງປະຊຸມ ໄດ້ກ່າວເປີດ ແລະ ສະເໜີໃຫ້ທີ່ປະຊຸມຊາບວ່າ: ບັນດາທ່ານສະມາຊິກລັດຖະສະພາໜຸ່ມທີ່ເຂົ້າຮ່ວມກອງປະຊຸມ ລ້ວນແຕ່ແມ່ນຜູ້ທີ່ຮັບຜິດຊອບວຽກງານຊາວໜຸ່ມໄວໜຸ່ມຂອງສະພາສູງຣັດເຊຍ ທີ່ປະຈຳການຢູ່ສະພາຂັ້ນສູນກາງ ແລະ ທ້ອງຖິ່ນ. ພ້ອມທັງຕີລາຄາສູງການພົບປະແລກປ່ຽນຄັ້ງນີ້ ເຖິງວ່າເປັນຄັ້ງທຳອິດຂອງສອງຄະນະສະມາຊິກສະພາໜຸ່ມຂອງລາວ ແລະ ຣັດເຊຍ ເຊິ່ງສອງຝ່າຍໄດ້ແລກປ່ຽນຄຳເຫັນນຳກັນຢ່າງກົງໄປກົງມາ, ດ້ວຍຄວາມຈິງໃຈ ແລະ ມີຄວາມຮັບຜິດຊອບສູງ ໂດຍຝ່າຍຣັດເຊຍລົງເລິກຢູ່ 4 ຫົວຂໍ້ທີ່ຕິດພັນກັບຊາວໜຸ່ມໄວໜຸ່ມ ແລະ ການພັດທະນາຢູ່ ສ.ຣັດເຊຍ ເຊັ່ນ: 1. ກ່ຽວກັບໂຄງການຊາວໜຸ່ມໃນຣັດເຊຍ, ການປະຕິບັດ, ການແລກປ່ຽນປະສົບການ; 2. ກົດໝາຍວ່າດ້ວຍການຊ່ວຍເຫຼືອຊາວໜຸ່ມໃນຣັດເຊຍ ແລະ ສປປລາວ; 3. ອາສາສະໝັກໃນໄລຍະສຸກເສີນ ແລະ ພະຍາດລະບາດ, ການປະຕິບັດຂອງການຈັດຕັ້ງອາສາສະໝັກ, ວິທີການກະຕຸ້ນໃຫ້ກຳລັງໃຈ; 4. ການສະໜັບສະໜູນຊາວໜຸ່ມໃນລະດັບລັດ, ບົດຮຽນການປະຕິບັດທີ່ດີ ແລະ ປະສົບການໃໝ່.

ໃນຕອນທ້າຍ, ສອງຝ່າຍ ໄດ້ຕີລາຄາສູງຕໍ່ການຈັດກອງປະຊຸມທາງໄກຮ່ວມກັນຄັ້ງນີ້ ໂດຍເຫັນໄດ້ວ່າມີເນື້ອໃນທີ່ດີ, ແທດຕົວຈິງຂອງຍຸກສະໄໝ ອັນເຮັດໃຫ້ສອງຝ່າຍສາມາດແລກປ່ຽນບົດຮຽນປະສົບການ, ການເຄື່ອນໄຫວຈັດຕັ້ງປະຕິບັດບົດບາດ ແລະ ໜ້າທີ່ຂອງຕົນ ກໍຄືຂອງຊາວໜຸ່ມຂອງສອງປະເທດໃນຜ່ານມາ ແລະ ຕໍ່ໜ້າ; ພ້ອມກັນນີ້, ສອງຝ່າຍຍັງໄດ້ເປັນເອກພາບ ຈະສືບຕໍ່ພົວພັນຮ່ວມມື ໂດຍແລກປ່ຽນການພົບປະການຢ້ຽມຢາມ ທັງເຊິ່ງໜ້າ ແລະ ຜ່ານອອນລາຍທາງໄກນຳກັນ ເພື່ອແລກປ່ຽນຂໍ້ມູນ-ຂ່າວສານ ກ່ຽວກັບຊາວໜຸ່ມໄວໜຸ່ມ ກໍຄືສະມາຊິກສະພາໜຸ່ມຂອງສອງປະເທດ ໃນນາມທີ່ເປັນ "ກະດູກສັນຫຼັງຂອງຊາດ" ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ.




# ຄະນະສະມາຊິກສະພາແຫ່ງຊາດເພດຍິງ ສຳເລັດການເຂົ້າຮ່ວມກອງປະຊຸມ WAIPA




(ສພຊ) ວັນທີ 5 ມິຖຸນາ 2023, ຄະນະສະມາຊິກສະພາແຫ່ງຊາດເພດຍິງ ຂອງສະພາແຫ່ງຊາດລາວ ນຳໂດຍທ່ານ ນາງ ວັນດີ ບຸດທະສະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ, ຮອງປະທານກຳມາທິການການຕ່າງປະເທດ; ທ່ານ ປອ. ນາງ ຈັນໂສດາ ພອນທິບ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ, ຮອງປະທານສູນກາງສະຫະພັນແມ່ຍິງລາວ ແລະ ທ່ານ ນາງ ວິໄຊ ສຣິດທິຣາດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມກອງປະຊຸມຄະນະປະສານງານສະມາຊິກລັດຖະສະພາເພດຍິງ ຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (WAIPA) ໃນຮູບແບບທາງໄກ. ກອງປະຊຸມດັ່ງກ່າວ, ຈັດຂຶ້ນພາຍໃຕ້ການເປັນປະທານຂອງທ່ານ ນາງ ໄອລິນ ຢູເຊຍນາ ໂຣບາ ປູຕຣິ ສະມາຊິກສະພາຜູ້ແທນລາຊະດອນ ແຫ່ງ ສາທາລະນະລັດອິນໂດເນເຊຍ ທັງເປັນປະທານ WAIPA ໂດຍມີສະມາຊິກລັດຖະສະພາເພດຍິງ ຈາກປະເທດສະມາຊິກໄອປາ ເຊັ່ນ: ບຣູໄນ, ກຳປູເຈຍ, ອິນໂດເນເຊຍ, ລາວ, ຫວຽດນາມ ແລະ ຟີລິບປິນ ພ້ອມດ້ວຍທ່ານເລຂາທິການໃຫຍ່ໄອປາ ແລະ ຊ່ຽວຊານຈາກອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງຈຳນວນໜຶ່ງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບທັດສະນະ, ຂໍ້ມູນ, ພາລະບົດບາດ ແລະ ຄວາມສຳຄັນຂອງແມ່ຍິງໃນການເປັນຜູ້ນຳໃນຂົງເຂດຕ່າງໆ, ການຍົກສູງການມີສ່ວນຮ່ວມຂອງແມ່ຍິງ ໃນວຽກງານການພັດທະນາ ແລະ ການສົ່ງເສີມການເປັນຜູ້ນຳຂອງແມ່ຍິງໃນອາຊຽນ ຈາກບັນດາຊ່ຽວຊານ ແລະ ນັກວິຊາການທີ່ເຂົ້າຮ່ວມ ເພື່ອເປັນຂໍ້ມູນໃນການກະກຽມຫົວຂໍ້ຂອງກອງປະຊຸມວຽກງານສະມາຊິກລັດຖະສະພາເພດຍິງ WAIPA ທີ່ຈະຈັດຂຶ້ນໃນກອງປະຊຸມສະມັດຊາໃຫຍ່ AIPA ຄັ້ງທີ 44 ທີ່ປະເທດອິນໂດຍເນເຊຍ ໃນເດືອນສິງຫາ 2023 ທີ່ຈະມາເຖິງ. ໃນກອງປະຊຸມ, ປະເທດເຈົ້າພາບອິນໂດເນເຊຍ ໄດ້ສະເໜີຫົວຂໍ້: "ເພີ່ມທະວີຄວາມເຂັ້ມແຂງຂອງອາຊຽນ ຜ່ານຄວາມເປັນຜູ້ນຳຂອງແມ່ຍິງແລະການຕອບສະໜອງຕໍ່ບົດບາດຍິງ-ຊາຍ ຂອງສະມາຊິກລັດຖະສະພາ (Enhancing ASEAN Resilience through Women Leadership and Gender Responsive Parliament)". ພ້ອມກັນນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ຍັງໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ເຫັນດີເປັນເອກະພາບຕໍ່ຫົວຂໍ້ທີ່ອິນໂດເນເຊຍສະເໜີ ເຊິ່ງຈະໄດ້ສືບຕໍ່ນຳໄປປຶກສາຫາລືກັນໃນກອງປະຊຸມ WAIPA ແລະ ມີມະຕິຮັບຮອງເອົາໃນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 44 ຕາມຂັ້ນຕອນ, ທັງນີ້ກໍເພື່ອເປັນການຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງແມ່ຍິງໃນການສ້າງຄວາມເຂັ້ມແຂງໃຫ້ແກ່ອາຊຽນໃນຕໍ່ໜ້າ.

## ຮອງປະທານ...

(ຕໍ່ຈາກໜ້າ 1)

ນາງ ລິວ ຊູນ ລິນ (Leow Siu Lin) ເອກອັກຄະລັດຖະທູດແຫ່ງ ສິງກະໂປ ປະຈຳ ສປປ ລາວ ທີ່ເຫັນວ່າຕະຫຼອດໄລຍະຂອງການປະຕິບັດໜ້າທີ່ຢູ່ ສປປລາວ ທ່ານໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍການພົວພັນຮ່ວມມື ລະຫວ່າງ ສອງປະເທດ ລາວ ແລະ ສິງກະໂປ ຕະຫຼອດໄລຍະຜ່ານມາໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວເປັນກ້າວໆ ພ້ອມທັງຕາງໜ້າພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ສະແດງຄວາມຂອບໃຈຕໍ່ລັດຖະບານ ແລະ ປະຊາຊົນສິງກະໂປ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ ສປປລາວ ໃນການພັດທະນາຊັບພະຍາກອນມະນຸດ ກໍຄືພື້ນຖານໂຄງລ່າງ, ການສຶກສາ, ສາທາລະນະສຸກ ແລະ ອື່ນໆ; ພ້ອມນັ້ນ, ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ອວຍພອນໃຫ້ແກ່ທ່ານທູດ ຈົ່ງເດີນທາງກັບຄືນປະເທດດ້ວຍຄວາມສະຫວັດດີພາບ ພ້ອມທັງອວຍພອນໃຫ້ທ່ານເອກອັກຄະລັດຖະທູດ ຈົ່ງປະສົບຜົນສຳເລັດໃນໜ້າທີ່ວຽກງານໃໝ່ທີ່ໃຫຍ່ກວ່າເກົ່າ.

ຈາກນັ້ນ, ທ່ານ ນາງ ລິວ ຊູນ ລິນ ໄດ້ສະແດງຄວາມຂອບໃຈ ທ່ານຮອງປະທານສະພາແຫ່ງຊາດລາວ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ຂອບໃຈຕໍ່ລັດຖະບານລາວ ກໍຄືສະພາແຫ່ງຊາດ ທີ່ໄດ້ເອົາໃຈໃສ່ໃຫ້ການຮ່ວມມືຊ່ວຍເຫຼືອໃນການປະຕິບັດໜ້າທີ່ການທູດຂອງຕົນ ຢູ່ ສປປ ລາວ ຕະຫຼອດໄລຍະເວລາຜ່ານມາ ແລະ ສະແດງຄວາມຫວັງວ່າລັດຖະບານ ແລະ ສະພາແຫ່ງຊາດລາວ ຈະສືບຕໍ່ໃຫ້ການຮ່ວມມືແກ່ທ່ານເອກອັກຄະລັດຖະທູດ ຄົນໃໝ່ທີ່ຈະມາຮັບໜ້າທີ່ຕໍ່ໄປ ເພື່ອພ້ອມກັນສືບຕໍ່ຊຸກຍູ້, ສົ່ງເສີມສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສອງປະເທດທີ່ມີມາແລ້ວນັ້ນ ໃຫ້ສືບຕໍ່ໄດ້ຮັບການຂະຫຍາຍຕົວ ແລະ ເປັນຮູບປະທຳຍິ່ງໆຂຶ້ນ.



## ພິທີມອບຫຼຽນ...

(ຕໍ່ຈາກໜ້າ 1)



ພ້ອມທັງປະທານ-ຮອງປະທານກຳມາທິການ, ສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງກຳມາທິການວັດທະນະທຳ-ສັງຄົມ ປະຈຳຢູ່ 18 ເຂດເລືອກຕັ້ງ, ຄະນະກົມ, ຄະນະພະແນກ, ຕາງໜ້າກະຊວງສາທາລະນະສຸກ ແລະ ພະນັກງານຈຳນວນໜຶ່ງ.

ໃນໂອກາດນີ້, ທ່ານນາງ ທຸມມາລີ ວົງພະຈັນ ໄດ້ກ່າວວ່າ: ສະພາແຫ່ງຊາດ ໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນການຄວບຄຸມຢາສູບ ເຊິ່ງໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາສາກົນວ່າດ້ວຍການຄວບຄຸມຢາສູບ ໃນປີ 2006. ມາເຖິງເດືອນພະຈິກ 2009 ສະພາແຫ່ງຊາດ ໄດ້ພິຈາລະນາຮັບຮອງເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ ແລະ ປີ 2021 ໄດ້ຮັບຮອງເອົາກົດໝາຍວ່າດ້ວຍການຄວບຄຸມຢາສູບ (ສະບັບປັບປຸງ) ໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງໄດ້ກຳນົດຕື່ມ: ຫ້າມຜະລິດ, ນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຊື້-ຂາຍ ແລະ ບໍລິໂພກຢາສູບໄຟຟ້າທີ່ບັນຈຸ ແລະ ບໍ່ບັນຈຸສານນິໂກຕິນ (Electric nicotine and non-nicotine delivery systems ENDS/ENNDS) ເພື່ອເປັນເຄື່ອງມືທາງດ້ານນິຕິກຳໃນການຈັດຕັ້ງປະຕິບັດວຽກງານຄວບຄຸມຢາສູບ ເພື່ອປົກປ້ອງສຸຂະພາບປະຊາຊົນ, ສັງຄົມ, ສິ່ງແວດລ້ອມ ແລະ ຜົນສະທ້ອນທາງດ້ານເສດຖະກິດຈາກການບໍລິໂພກ ແລະ ການຮັບຄວັນຢາສູບ ໃນ ສປປ ລາວ. ສະພາແຫ່ງຊາດ ໂດຍສະເພາະກຳມາທິການວັດທະນະທຳ-ສັງຄົມ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດດ້ານນິຕິບັນຍັດ, ດ້ານການຕົກລົງບັນຫາພື້ນຖານຂອງປະເທດຊາດ ແລະ ຕິດຕາມກວດກາຕໍ່ການຄວບຄຸມຢາສູບ ຢູ່ ສປປ ລາວ ຢ່າງເປັນລະບົບຕໍ່ເນື່ອງ; ສະນັ້ນ, ຕາງໜ້າໃຫ້ກຳມາທິການວັດທະນະທຳ-ສັງຄົມ ແລະ ສະພາແຫ່ງຊາດ ຈະສືບຕໍ່ປະຕິບັດໜ້າທີ່ຂອງຕົນຕາມ 3 ພາລະບົດບາດຕໍ່ການຄວບຄຸມຢາສູບຢູ່ ສປປ ລາວ ຮ່ວມກັບລັດຖະບານ ແລະ ອົງການອະນາໄມໂລກ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຢ່າງບໍ່ຢຸດຢັ້ງ.

## ຝຶກອົບຮົມ...

(ຕໍ່ຈາກໜ້າ 1)

ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ວິທະຍາໄລເຕັກນິກປາກປ່າສັກ, ກົມພິທີການທູດ ກະຊວງການຕ່າງປະເທດ, ຫ້ອງວ່າການສູນກາງພັກ ແລະ ຈາກສະພາແຫ່ງຊາດ; ມີຄະນະກົມ, ຄະນະພະແນກ, ເລຂາການນຳ ແລະ ພະນັກງານ-ວິຊາການ ທີ່ກ່ຽວຂ້ອງ ເຊິ່ງກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກ UNDP ແລະ ຄະນະເລຂາທິການສະພາແຫ່ງຊາດ.

ທັງນີ້, ເພື່ອເຮັດໃຫ້ການເປັນເສນາທິການ ໃນວຽກງານກະກຽມ ແລະ ຮັບໃຊ້ໂດຍສະເພາະການເກັບກຳ ແລະ ສະໜອງຂໍ້ມູນ-ຂ່າວສານ ໃຫ້ແກ່ການນຳສະພາແຫ່ງຊາດ ໃຫ້ມີປະສິດທິພາບດີຂຶ້ນເລື້ອຍໆ ແລະ ສ້າງຄວາມເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດວຽກງານດ້ານຕ່າງໆ; ການປະສານງານວຽກງານດ້ານຕ່າງໆ; ເພື່ອຮັບຟັງບົດຮຽນກ່ຽວກັບການເປັນເລຂາການນຳ ກັບພາກສ່ວນກ່ຽວຂ້ອງ ລວມທັງທັດສະນະ ຄຸນສົມບັດ ຂອງເລຂາການນຳ ທັງເພື່ອຮັບຟັງ ແລະ ແລກປ່ຽນຄຳຄິດຄຳເຫັນ ແລະ ສະເໜີວິທີການແກ້ໄຂບັນຫາຕ່າງໆ ໃນການປະຕິບັດວຽກງານຕົວຈິງຜ່ານມາ ທີ່ມີທັງດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງທີ່ພາໃຫ້ການຈັດຕັ້ງປະຕິບັດວຽກງານບໍ່ທັນໄດ້ຮັບຜົນດີເທົ່າທີ່ຄວນ.

ໃນພິທີ, ທ່ານ ນາງ ປິ່ງຄຳ ລາຊະສົມມາ ໄດ້ກ່າວເປີດກອງປະຊຸມວ່າ: ກອງປະຊຸມຝຶກອົບຮົມວຽກງານເລຂານຸການໃຫ້ແກ່ເລຂາການນຳພາຍໃນສະພາແຫ່ງຊາດຄັ້ງນີ້ ແມ່ນໄດ້ສຸມໃສ່ຄົ້ນຄວ້າແລກປ່ຽນສົນທະນາ ແລະ ຈັດຕັ້ງແບ່ງກຸ່ມເພື່ອລົງເລິກຝຶກຫັດ ເຊິ່ງບັນດາເນື້ອໃນທີ່ນຳມາຝຶກອົບຮົມຄັ້ງນີ້ ລ້ວນແຕ່ເປັນຄວາມຮູ້ ແລະ ນິຕິກຳສຳຄັນ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງມາຍັງບັນດາທ່ານເລຂາການນຳ, ຄະນະຮັບຜິດຊອບກອງປະຊຸມ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມຝຶກອົບຮົມທຸກທ່ານ ຈົ່ງເອົາໃຈໃສ່ເຂົ້າຮ່ວມຮັບຟັງ ແລະ ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າແລກປ່ຽນບົດຮຽນຕໍ່ບັນດາເນື້ອໃນທີ່ນຳມາເຜີຍແຜ່ໃນກອງປະຊຸມຄັ້ງນີ້.

ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການສະເໜີບົດຮຽນກ່ຽວກັບພາວະການເປັນຜູ້ນຳ; ວຽກງານເລຂານຸການ, ເອກະສານ ແລະ ການບໍລິຫານຫ້ອງການ; ຄວາມຮູ້ພື້ນຖານກ່ຽວກັບພິທີການທູດ; ບົດຮຽນໃນການສຳເນົາເອກະສານຕ່າງໆ; ການຈໍລະຈອນເອກະສານພາຍໃນສະພາແຫ່ງຊາດ ແລະ ການຈໍລະຈອນເອກະສານຂອງສະພາແຫ່ງຊາດ ອອກສູ່ພາຍນອກ ແລະ ຄວາມຮູ້ພື້ນຖານກ່ຽວກັບພາລະບົດບາດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມຍັງໄດ້ສົນທະນາແລກປ່ຽນບົດຮຽນ, ປະສົບການເຊິ່ງກັນແລະກັນ ແລະ ໄດ້ມີການແບ່ງກຸ່ມເພື່ອເຮັດຝຶກຫັດຕົວຈິງ.

ໂອກາດນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມວ່າ: ກອງປະຊຸມຄັ້ງນີ້ດຳເນີນໄປດ້ວຍບັນຍາກາດທີ່ດີ, ມີການສົນທະນາແລກປ່ຽນບົດຮຽນຢ່າງກົງໄປກົງມາ ແລະ ສ້າງສັນ ຕໍ່ບັນດາເນື້ອໃນຕ່າງໆ ໂດຍແນໃສ່ເພີ່ມຄວາມຮັບຮູ້, ເຂົ້າໃຈເປັນເອກະພາບ ໃນການຈັດຕັ້ງປະຕິບັດຕົວຈິງ. ການເຄື່ອນໄຫວປະຕິບັດໜ້າທີ່ຂອງບັນດາເລຂາທີ່ເປັນເສນາທິການຊ່ວຍວຽກງານນຳສະພາແຫ່ງຊາດໂດຍກົງ ເປັນວຽກງານທີ່ສຳຄັນ ໃນການສ້າງສິ່ງອຳນວຍຄວາມສະດວກດ້ານຕ່າງໆ ໃຫ້ການເຄື່ອນໄຫວຂອງການນຳສະພາແຫ່ງຊາດ ເຊິ່ງໄລຍະຜ່ານມາກໍໄດ້ມີຜົນສຳເລັດ; ວຽກງານດັ່ງກ່າວ ເຖິງວ່າຈະມີຄວາມຫຍຸ້ງຍາກ ແຕ່ເຫັນວ່າບັນດາເລຂາການນຳຂອງສະພາແຫ່ງຊາດ ກໍໄດ້ມີຄວາມອົດທົນ, ມີຄວາມຮັບຜິດຊອບສູງ, ມີຄວາມພະຍາຍາມແກ້ໄຂ, ມີຄວາມຮັບຜິດຊອບໃຫ້ການຮັບໃຊ້ວຽກງານຕ່າງໆ ໄດ້ຮັບຜົນສຳເລັດໂດຍດີຕະຫຼອດມາ ແລະ ຫວັງຢ່າງຍິ່ງວ່າບັນດາທ່ານທີ່ເປັນເສນາທິການໃຫ້ແກ່ການນຳ ນຳເອົາບົດຮຽນຈາກບັນດາທ່ານວິທະຍາກອນທີ່ມີປະສົບການ ໄດ້ຖ່າຍທອດຄວາມຮູ້ຄວາມເຂົ້າໃຈ ທີ່ໄດ້ຝຶກອົບຮົມໃນຄັ້ງນີ້ ເພື່ອໄປໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານໃຫ້ມີຜົນສຳເລັດ ແລະ ປະສິດທິພາບສູງ.

**(ສຸພາວັນ ທອນສະນິດ)**

## ສຳເລັດການເຂົ້າຮ່ວມກອງປະຊຸມສະພາທີ່ປຶກສາຂອງໄອປາກ່ຽວກັບໄພອັນຕະລາຍຂອງຢາເສບຕິດ

(ສພຊ) ໃນລະຫວ່າງວັນທີ 29 ພຶດສະພາ ຫາວັນທີ 1 ມິຖຸນາ 2023, ທ່ານ ອຳໄພ ຈິດມານົນ ຮອງປະທານກຳມາທິການກົດໝາຍ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມສະພາທີ່ປຶກສາຂອງໄອປາກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPACODD) ຄັ້ງທີ 6 ທີ່ເມືອງໂບກໍ ສາທາລະນະລັດ ອິນໂດເນເຊຍ ພາຍໃຕ້ຫົວຂໍ້: “ການສົ່ງເສີມການຈະເລີນເຕີບໂຕຂອງເສດຖະກິດແບບກວມລວມເພື່ອອາຊຽນປອດຢາເສບຕິດ”. ກ່າວເປີດກອງປະຊຸມຢ່າງເປັນທາງການໂດຍທ່ານ Lodewijk Freidrich Paulus ຮອງປະທານສະພາຜູ້ແທນລາສະດອນ ອິນໂດເນເຊຍ ໃນນາມຕາງໜ້າໃຫ້ປະທານ AIPA, ມີທ່ານ Ar. Siti Rozaimeriyanty DSLJ Haji Abdul Rahman ເລຂາທິການໃຫ່ຍໄອປາ ແລະ ສະມາຊິກລັດຖະສະພາຈາກບັນດາປະເທດສະມາຊິກອາຊຽນເຂົ້າຮ່ວມ.




ກອງປະຊຸມ, ໄດ້ປຶກສາຫາລືກ່ຽວກັບບັນຫາການຕ້ານໄພຄຸກຄາມຈາກຢາເສບຕິດ, ລາຍງານຄືບຄວາມຄືບໜ້າໃນການຄວບຄຸມຢາເສບຕິດ ຂອງແຕ່ລະປະເທດສະມາຊິກລັດຖະສະພາ ເພື່ອຊອກຫາຊ່ອງທາງ ແລະ ວິທີທາງແກ້ໄຂຮ່ວມກັນໃນຕໍ່ໜ້າ; ກອງປະຊຸມໄດ້ທົບທວນຄືນແຜນງານຫຼັກຂອງອາຊຽນ ວ່າດ້ວຍຊຸມຊົນຕ້ານຢາເສບຕິດ ແລະ ສິ່ງຜິດກົດໝາຍ 2016-2025 ແລະ ແຜນປະຕິບັດງານອາຊຽນໃນການຕ້ານການຄ້າຂາຍຢາເສບຕິດຂ້າມຊາດ 2016-2025; ກອງປະຊຸມໄດ້ເນັ້ນໜັກເຖິງບົດບາດອັນສຳຄັນຂອງລັດຖະສະພາ ໃນການກຳນົດດ້ານກົດໝາຍພາຍໃນຂອງແຕ່ລະປະເທດເພື່ອແກ້ໄຂບັນຫາຢາເສບຕິດ ເຊິ່ງຄະນະຜູ້ແທນຈາກແຕ່ລະປະເທດສະມາຊິກໄອປາໄດ້ມີຄວາມເປັນເອກະພາບກັນກ່ຽວກັບຜົນຮ້າຍຈາກຢາເສບຕິດ ເຊິ່ງເປັນໄພຂົ່ມຂູ່ ແລະ ຄຸກຄາມຕໍ່ກັບສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງແຕ່ລະປະເທດ ມີຜົນເສຍຕໍ່ເສດຖະກິດ, ຕໍ່ກັບບັນຫາດັ່ງກ່າວ ບັນດາປະເທດໃນອາຊຽນຕ້ອງໄດ້ຮ່ວມມືກັນຢ່າງແຂງແຮງ ແລະ ເປັນຮູບປະທຳຫຼາຍຂຶ້ນກ່ວາເກົ່າ ເພື່ອຕ້ານກັບໄພຄຸກຄາມຂອງຢາເສບຕິດ ແລະເພື່ອບັນລຸເປົ້າໝາຍລວມ, ສ້າງໃຫ້ປະຊາຄົມອາຊຽນປອດຢາເສບຕິດ ເຊິ່ງມີຄວາມຈຳເປັນຕ້ອງໄດ້ວາງກອບການຮ່ວມມືກັນທາງດ້ານກົດໝາຍ, ການແລກປ່ຽນຂໍ້ມູນຂ່າວສານ, ພິເສດແມ່ນກັບບັນດາປະເທດທີ່ມີຊາຍແດນຮ່ວມກັນ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ລາຍງານສະພາບບັນຫາຢາເສບຕິດທີ່ເກີດຂຶ້ນອັນເນື່ອງມາຈາກສະພາບຈຸດພິເສດທາງດ້ານທີ່ຕັ້ງ ເຊິ່ງ ສປປລາວ ເປັນປະເທດທາງຜ່ານທີ່ພວກຄ້າຂາຍຢາເສບຕິດເອົາເປັນຈຸດຜ່ານໃນການເຄື່ອນຍ້າຍ ຫຼື ສົ່ງຕໍ່ຢາເສບຕິດ. ລັດຖະບານ ສປປ ລາວ ເຫັນໄດ້ບັນຫາຈຸດພິດເສດດັ່ງກ່າວ ແລະ ເປັນບຸລິມະສິດ ເພື່ອແກ້ໄຂບັນຫາຢາເສບຕິດ ຈຶ່ງສະເໜີໃຫ້ສະພາແຫ່ງຊາດຮັບຮອງເອົາເປັນວາລະແຫ່ງຊາດ ໄປຄຽງຄູ່ກັບການປັບປຸງກົດໝາຍວ່າດ້ວຍຢາເສບຕິດ ໃນປີ 2022 ທີ່ຜ່ານມາ, ສາມາດປາບປາມມ້າງຄະດີຢາເສບຕິດລາຍໃຫຍ່ໄດ້ຫຼາຍຄະດີ ແລະ ສາມາດຍຶດໄດ້ຢາເສບຕິດປະເພດຕ່າງໆເປັນຈຳນວນຫຼວງຫຼາຍ ແລະ ສາມາດຈັບກຸມຜູ້ຕ້ອງຫາໄດ້ຫຼາຍພໍສົມຄວນ ໃນປີ 2022 ໜ່ວຍງານສະກັດກັ້ນ ແລະ ປາບປາມຢາເສບຕິດສປປລາວ ໄດ້ບັນລຸຜົນສຳເລັດໃນການສະກັດກັ້ນການຄ້າຂາຍຢາເສບຕິດ ໃນຂອບເຂດທົ່ວປະເທດ ມີທັງໝົດ 5.068 ຄະດີ, ຈັບຕົວຜູ້ກະທຳຜິດທັງໝົດ 7.410 ຄົນ (ຍິງ 853 ຄົນ), ມີຄົນຕ່າງປະເທດ 143 ຄົນ (ຍິງ 11 ຄົນ) ອັນສືບເນື່ອງມາຈາກການຈັດຕັ້ງປະຕິບັດວາລະແຫ່ງຊາດດັ່ງກ່າວ.

ໃນຕອນທ້າຍຂອງກອງປະຊຸມ, ຄະນະຜູ້ແທນໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງມະຕິຂອງກອງປະຊຸມ, ລົງນາມຮັບຮອງຕໍ່ບົດລາຍງານຂອງກອງປະຊຸມ. ພິເສດ, ຕາງໜ້າໃຫ້ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປ ລາວ ໂດຍທ່ານ ອຳໄພ ຈິດມານົນ ໄດ້ຂຶ້ນກ່າວຮັບການເປັນເຈົ້າພາບກອງປະຊຸມສະພາທີ່ປຶກສາຂອງໄອປາກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPACODD) ຄັ້ງທີ 7 ທີ່ ສປປ ລາວ ເຮົາຈະໄດ້ຖືກຮັບກຽດເປັນເຈົ້າພາບໃນປີ 2024 ທີ່ຈະມາເຖິງນີ້.

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ບັນດາເຜົ່າ ສະພາແຫ່ງຊາດ; ມີບັນດາທ່ານຮອງປະທານກຳມາທິການບັນດາເຜົ່າ, ກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກຳມາທິການແຜນການ ການເງິນ ແລະ ການກວດສອບ, ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ແລະ ບັນດາທ່ານຕາງໜ້າຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ຈາກ 18 ແຂວງທົ່ວປະເທດ ເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການສະເໜີການຕິດຕາມກວດກາບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງກຳມາທິການບັນດາເຜົ່າ ຈາກທ່ານຮອງປະທານກຳມາທິການບັນດາເຜົ່າ ແລະ ການປະກອບຄຳຄິດຄຳເຫັນ ຂອງທ່ານຮອງລັດຖະມົນຕີກະຊວງກະສິກຳແລະປ່າໄມ້; ການປະກອບຄຳຄິດຄຳເຫັນຂອງຫົວໜ້າ-ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງຜົ້ງສາລີ, ບໍ່ແກ້ວ, ອຸດົມໄຊ, ຫົວພັນ, ໄຊສົມບູນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ ແລະ ນະຄອນຫຼວງວຽງຈັນ.

**(ສອນສັກ ວັນວິໄຊ)**

# ສະພາປະຊາຊົນແຂວງເຊກອງ ເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ວຽກງານຕ່າງໆ




(ສພຊ) ເພື່ອປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນແຂວງ ໃນການຕິດຕາມກວດກາ ແລະ ເພື່ອເປັນການປະເມີນສະຫຼຸບຕີລາຄາຄືນຜົນການຕິດຕາມກວດກາຜົນການກວດສອບ ແລະ ຜົນການກວດກາຕາມມະຕິຂອງສະພາແຫ່ງຊາດ ແລະ ມະຕິຂອງສະພາປະຊາຊົນແຂວງຂອງພາກສ່ວນທີ່ກ່ຽວຂ້ອງໃນໄລຍະທີ່ຜ່ານມາ.

ສະພາປະຊາຊົນແຂວງເຊກອງ ໄດ້ຈັດກອງປະຊຸມຕີລາຄາຄືນກ່ຽວກັບການຕິດຕາມກວດກາຜົນການກວດສອບ ແລະ ຕິດຕາມກວດກາຜົນການກວດກາ ຕາມມະຕິຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ໃນຕອນເຊົ້າວັນທີ 19 ພຶດສະພາ 2023 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ໂດຍການເຂົ້າຮ່ວມເປັນປະທານຂອງທ່ານ ດົງເພັດ ພະຍິນ ປະທານສະພາປະຊາຊົນແຂວງ ແລະ ທ່ານ ຂັນຕີ ສີລະວົງສາ ຮອງເຈົ້າແຂວງ ແຂວງເຊກອງ, ມີບັນດາທ່ານຄະນະປະຈຳພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ອົງການກວດສອບແຫ່ງລັດປະຈຳພາກໃຕ້, ອົງການກວດກາລັດແຂວງ, ນາຍ ແລະ ພົນຕຳຫຼວດ, ບັນດາພະແນກການ ພ້ອມດ້ວຍຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບຕີລາຄາກ່ຽວກັບການຕິດຕາມກວດກາຜົນການກວດສອບ ແລະ ຕິດຕາມກວດກາ ຕາມມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໃນໄລຍະຜ່ານມາ ສະພາປະຊາຊົນແຂວງ ກໍຄືຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ລວມທັງບັນຫາທີ່ເປັນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ຕາມຄວາມຮັບຜິດຊອບຂອງຕົນ ແລະ ຕາມການມອບໝາຍ ເຊິ່ງຜ່ານການຕິດຕາມກວດກາເຫັນວ່າບັນດາຂະແໜງການໂດຍສ່ວນໃຫຍ່ ກໍໄດ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ມີຄວາມຖືກຕ້ອງ, ສອດຄ່ອງຕາມລະບຽບກົດໝາຍ ແລະ ມີຜົນສຳເລັດພໍສົມຄວນ ຄຽງຄູ່ກັບຜົນງານດ້ານດີ ກໍຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະໄດ້ສືບຕໍ່ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດໂດຍສະເພາະຍັງມີບາງຂະແໜງການຍັງບໍ່ທັນສາມາດດຳເນີນຕາມກຳນົດເວລາ, ຄຸນນະພາບບໍ່ທັນສູງ ແລະ ຈຳເປັນຕ້ອງຮີບຮ້ອນປັບປຸງແກ້ໄຂຮີບດ່ວນ ແລະ ທ່ວງທັນຕາມກຳນົດເວລາ.

ພ້ອມນັ້ນ, ຍັງໄດ້ຮັບຟັງຄຳຄິດຄຳເຫັນຈາກອົງການກວດສອບພາກໃຕ້, ອົງການກວດກາລັດແຂວງ ແລະ ການຊີ້ແຈງຂອງບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ກອງປະຊຸມຍັງໄດ້ພ້ອມກັນປຶກສາຫາລື, ແລກປ່ຽນປະກອບຄຳຄິດຄຳເຫັນຕໍ່ບົດລາຍງານ ແລະ ຕໍ່ເນື້ອໃນບັນຫາຕ່າງໆທີ່ກອງປະຊຸມໄດ້ນຳມາສະເໜີ ເຊິ່ງຕິດພັນກັບວຽກງານຕິດຕາມກວດກາການປະຕິບັດມະຕິຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຢ່າງມີຈຸດສຸມ, ມີເຫດມີຜົນ ແລະ ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ.

ຕໍ່ມາໃນວັນທີ 23 ພຶດສະພາ, ສະພາປະຊາຊົນແຂວງເຊກອງ ໄດ້ສົມທົບກັບກອງບັນຊາການ ປກສ ແຂວງ ໄດ້ເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດຢູ່ ສະໂມສອນເມືອງກະລຶມ ເຊິ່ງນຳໂດຍທ່ານ ດົງເພັດ ພະຍິນ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ, ມີທ່ານ ພັທ. ຮຽມ ໄຊຍະລາດ ຮອງຫົວໜ້າກອງບັນຊາການ ປກສ ແຂວງ ພ້ອມດ້ວຍປະທານ-ຮອງປະທານ ແລະ ວິຊາການສັງກັດຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ສະພາປະຊາຊົນແຂວງ ໂດຍການຕ້ອນຮັບຂອງທ່ານ ອໍປົວລາ ອ່ອນມະໄລວົງ ເຈົ້າເມືອງ ເມືອງກະລຶມ, ມີບັນດາທ່ານຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ຄະນະພັກ-ຄະນະບັນຊາກອງບັນຊາການ ປກຊ-ປກສ ເມືອງ ພ້ອມດ້ວຍອົງການທີ່ກ່ຽວຂ້ອງຂອງເມືອງເຂົ້າຮ່ວມ.

ການເຄື່ອນໄຫວວຽກງານຄັ້ງນີ້ ແມ່ນໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ກໍຄືການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ຄື: ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາໃນແຕ່ລະຂົງເຂດວຽກງານຢູ່ເມືອງດັ່ງກ່າວ ເຊິ່ງມີທັງຜົນງານດ້ານດີ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍຕ່າງໆໃນການຈັດຕັ້ງປະຕິບັດວຽກງານ ແລະ ບັນຫາອື່ນໆ. ຈາກນັ້ນ, ກໍໄດ້ມີການສົນທະນາແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນຢ່າງມີຈຸດສຸມ. ພ້ອມກັນນັ້ນ, ຍັງໄດ້ສະເໜີສະພາບຄວາມຫຍຸ້ງຍາກຫຼາຍບັນຫາໃນການຈັດຕັ້ງປະຕິບັດວຽກງານ ໂດຍສະເພາະດ້ານພື້ນຖານໂຄງລ່າງການຄົມມະນາຄົມ, ລະບົບໄຟຟ້າ, ນ້ຳປະປາ, ພາຫານະ ແລະ ອື່ນໆ ເພື່ອເປັນຂໍ້ມູນໃຫ້ນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ກໍຄືຂັ້ນສູນກາງ ຊ່ວຍກັນຊຸກຍູ້ ແລະ ພ້ອມກັນປັບປຸງແກ້ໄຂ.

ໂອກາດດັ່ງກ່າວ, ທ່ານ ດົງເພັດ ພະຍິນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄະນະພັກ-ຄະນະນຳ ກໍຄືອົງການປົກຄອງຂອງເມືອງ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຈົນໄດ້ຮັບຜົນສຳເລັດໃນຫຼາຍໆດ້ານ ພ້ອມທັງ, ເນັ້ນໜັກໃຫ້ອົງການປົກຄອງເມືອງ ສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ ໂດຍສະເພາະການຈັດເກັບລາຍຮັບເຂົ້າງົບປະມານໃຫ້ບັນລຸ, ຫັນການປູກ-ການລ້ຽງໃຫ້ຫຼາຍເພື່ອທົດແທນການນຳເຂົ້າ ແລະ ຮຽກຮ້ອງທຸກໆພາກສ່ວນເປັນເຈົ້າການ, ຮີບຮ້ອນເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານ 2 ວາລະແຫ່ງຊາດ ໃຫ້ມີຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້.

ພ້ອມນັ້ນ, ຍັງໄດ້ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ການບໍລິຫານຈັດການ ແລະ ການຄຸ້ມຄອງ ສະມາຊິກກຳມະບານ, ຊາວໜຸ່ມ ກຳມະກອນ ຢູ່ໂຮງງານປຸງແຕ່ງໄມ້ ຢູ່ບ້ານຕະນຶມ ເມືອງລະມາມຕື່ມອີກ.



# ສພຂ ຫົວພັນ ເຊື່ອມຊຶມເອກະສານວັນປະຫວັດສາດສຳຄັນຂອງຊາດຂອງພັກ

(ສພຊ) ໃນວັນທີ 18 ພຶດສະພາ 2023 ທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນແຂວງຫົວພັນ ໄດ້ຈັດກອງປະຊຸມເຊື່ອມຊຶມເອກະສານວັນຜ່າລົງປິດລ້ອມຂອງກອງພັນທີ 2 ວິລະຊົນ ທີ່ທົ່ງໄຫຫີນ ຊຽງຂວາງ ຄົບຮອບ 64 ປີ (18/5/1959-18/5/2023) ແລະ ວັນວິລະກຳໂຕນຄຸກຢ່າງມະຫັດສະຈັນຂອງບັນດາຜູ້ນຳຂອງພັກ ແລະ ແນວລາວສ້າງຊາດ ຄົບຮອບ 63 ປີ (24/5/1960-24/5/2023) ເປັນປະທານ ແລະ ເຜີຍແຜ່ເຊື່ອມຊຶມເອກະສານໃນຄັ້ງນີ້ ໂດຍສະຫາຍ ສົມສັກ ດອນຈານົດ ກຳມະການພັກແຂວງ, ເລຂາ



ໜ່ວຍພັກ ສພຂ, ຮອງປະທານສະພາປະຊາຊົນແຂວງ; ມີບັນດາສະຫາຍຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫຼອດຮອດພະນັກງານວິຊາການສະພາປະຊາຊົນແຂວງເຂົ້າຮ່ວມ.

ຈຸດປະສົງການເຊື່ອມຊຶມຄັ້ງນີ້, ເພື່ອເຮັດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ໄດ້ຮັບຮູ້, ເຂົ້າໃຈ ຢ່າງເລິກເຊິ່ງ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງບັນດາວັນປະຫວັດສາດສຳຄັນດັ່ງກ່າວເຂົ້າໃນການຝຶກຝົນຫຼໍ່ຫຼອມຕົນເອງຂອງສະມາຊິກພັກ, ພະນັກງານເພື່ອຮັບໃຊ້ຊາດ ຮັບໃຊ້ປະຊາຊົນ ເພີ່ມທະວີຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງອົງຄະນະພັກແຂວງຫົວພັນ ກໍຄືການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ຂອງລັດ ໃຫ້ປາກົດຜົນເປັນຈິງ ທັງເປັນປັບປຸງກໍ່ສ້າງພັກໃນທຸກດ້ານ ດ້ວຍມາດຕະການສືບຕໍ່ດຳເນີນຊີວິດການເມືອງປົວແປງພາຍໃນພັກໃຫ້ເລິກເຊິ່ງ ເຮັດໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພີ່ມຄວາມສາມາດນຳພາ ແລະ ລັກສະນະນຳໜ້າຂອງພັກໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ ພ້ອມທັງເປັນເຈົ້າການຍົກສູງສະຕິລະວັງຕົວຕໍ່ກົນອຸບາຍມ້າງເພຂອງອິດທິກຳລັງປໍລະປັກ, ຕີຖອຍບັນດາປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ ສັງຄົມມີຄວາມສະຫງົບເປັນລະບຽບຮຽບຮ້ອຍ. ນອກນີ້, ຍັງເປັນການປຸກລະດົມນ້ຳໃຈຮັກຊາດ, ຮັກລະບອບໃໝ່, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເຊີດຊູບົດບາດການນຳພາຂອງພັກໄປພ້ອມກັບການປຸກລະດົມຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ໂດຍຕິດພັນກັບການຍູ້ແຮງຂະບວນການປະຕິບັດ 2 ວາລະແຫ່ງຊາດ ກໍຄືການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ໃນຕໍ່ໜ້າ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້.



# ສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ




(ສພຊ) ເມື່ອວັນທີ 18 ພຶດສະພາ 2023 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ດຳເນີນກອງປະຊຸມສະຫຼຸບວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກສະພາປະຊາຊົນແຂວງ; ເຂົ້າຮ່ວມໂດຍມີສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີຄະນະໜ່ວຍພັກ, ສະມາຊິກພັກສົມບູນ-ສຳຮອງ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ, ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ-ພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງທົ່ວແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ກລສພ, ລົງວັນທີ 20 ມັງກອນ 2023 ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະກາງສະໄໝ; ຄຳແນະນຳຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 25/ກລສພ, ລົງວັນທີ 24 ມັງກອນ 2023 ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ກລສພ, ລົງວັນທີ 24 ມັງກອນ 2023 ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະກາງສະໄໝ; ແຈ້ງການຂອງຄະນະປະຈຳພັກແຂວງ ກ່ຽວກັບການດຳເນີນກອງປະຊຸມໃຫຍ່ຂອງບັນດາຮາກຖານພັກ ໃນຂອບເຂດທົ່ວແຂວງ ທີ່ຮອດອາຍຸດຳເນີນກອງປະຊຸມໃຫຍ່ຕົນ ສະບັບເລກທີ 39/ຄປພຂ, ລົງວັນທີ 24 ມັງກອນ 2023; ແຈ້ງການແນະນຳຂອງຄະນະຈັດຕັ້ງແຂວງ ວ່າດ້ວຍການຜັນຂະຫຍາຍບົດບັນທຶກລະຫວ່າງຄະນະຈັດຕັ້ງແຂວງ ແລະ ພະແນກພາຍໃນແຂວງ ກ່ຽວກັບການຈັດຕັ້ງປະຕິບັດໜ້າວຽກ ຄຸ້ມຄອງພະນັກງານ ແລະ ປັບປຸງກົງຈັກການຈັດຕັ້ງ ສະບັບເລກທີ 099/ຄຈຂ, ລົງວັນທີ 23 ມັງກອນ 2023.

ນອກນັ້ນ, ໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຕິດຕາມ,ກວດກາພັກປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ; ບົດສະຫຼຸບວຽກງານກວດກາທົ່ວແຂວງອຸດົມໄຊ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງຄະນະກວດກາແຂວງ; ບົດໂອ້ລົມຂອງທ່ານ ຄຳພັນ ພົມມະທັດ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານຄະນະກວດກາສູນກາງພັກ, ປະທານອົງການກວດກາແຫ່ງລັດ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ຕໍ່ກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2022 ແລະ ຜ່ານບົດໂອ້ລົມຂອງທ່ານ ຄຳພຽງ ຢາຈົງວາ ຮອງເລຂາພັກແຂວງ ຜູ້ຊີ້ນຳວຽກງານແນວຄິດ ແລະ ວຽກງານພັກ-ພະນັກງານ.

ໂອກາດນີ້, ບັນດາສະຫາຍສະມາຊິກພັກໄດ້ປະກອບຄຳຄິດຄຳເຫັນ, ຕໍ່ບັນດາເນື້ອໃນທີ່ນຳມາຜ່ານກອງປະຊຸມໃນຄັ້ງນີ້ ຢ່າງກົງໄປກົງມາ ແລະ ສະຫາຍເລຂາໜ່ວຍພັກກໍໄດ້ສັງລວມບັນດາຄຳຄິດຄຳເຫັນ ແລະ ແກ້ຂໍ້ຂ້ອງໃຈ ຕໍ່ບາງຄຳເຫັນຂອງສະມາຊິກພັກພາຍໃນໜ່ວຍຕື່ມອີກ.

**(ແສງພອນ ອິນນະລົງ)**

# ເຄື່ອນໄຫວພົບປະ ຜູ້ມີສິດເລືອກຕັ້ງຢູ່ເມືອງນານ ແຂວງຫຼວງພະບາງ

(ສພຊ) ໃນກາງເດືອນພຶດສະພາ 2023 ທ່ານ ປອ. ວົງເພັດ ອຸດົມລິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ໄດ້ເຄື່ອນໄຫວພົບປະໂອ້ລົມຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຢູ່ຈຸດບ້ານປ່າໄຜມີ 3 ບ້ານເຂົ້າຮ່ວມ ຄື: ບ້ານປ່າໄຜ, ບ້ານນາຝາຍ ແລະ ບ້ານນາເລົາ ແລະ ຈຸດບ້ານນາເຄີນ ມີ 2 ບ້ານເຂົ້າຮ່ວມ ຄື: ບ້ານນາເຄີນ ແລະ ບ້ານສີວິໄລ ມີຜູ້ເຂົ້າຮ່ວມ ທັງໝົດ 339 ຄົນ ຍິງ 122 ຄົນ.

ການເຄື່ອນໄຫວວຽກງານຄັ້ງນີ້, ກໍເພື່ອເປັນການພົບປະໂອ້ລົມພໍ່ແມ່ປະຊາຊົນຢູ່ທ້ອງຖິ່ນຮາກຖານ ແລະ ນຳເອົາຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ II ເຊິ່ງມີເນື້ອໃນມະຕິກອງປະຊຸມສະພາແຫ່ງຊາດ ປະກອບມີ: ການຮັບຮອງວຽກຂອງລັດຖະບານ, ການຮັບຮອງເອົາວຽກງານຂົງເຂດກວດສອບແຫ່ງລັດ ແລະ ກວດກາແຫ່ງລັດ, ການຮັບຮອງເອົາວຽກງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ການຮັບຮອງວຽກງານສະພາແຫ່ງຊາດ ແລະ ການຮັບຮອງກົດໝາຍຈຳນວນ 12 ສະບັບ; ມະຕິກອງປະຊຸມສະພາປະຊາຊົນແຂວງ ປະກອບມີ: ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງແຂວງ, ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2020 ແລະ ທິດທາງແຜນການ ປະຈຳປີ 2023 ຂອງແຂວງ, ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານອົງການກວດສອບປະຈຳພາກເໜືອ ແລະ ອົງການກວດກາລັດແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການ



ໄອຍະການປະຊາຊົນແຂວງ, ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2020 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສານປະຊາຊົນແຂວງ, ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2012 ແລະ ທິດທາງແຜນການ ປະຈຳປີ 2023 ຂອງສະພາປະຊາຊົນແຂວງ.

ທັງນີ້, ກໍເພື່ອເຮັດໃຫ້ປະຊາຊົນ 5 ບ້ານດັ່ງກ່າວ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ແນໃສ່ເຮັດໃຫ້ບັນດາບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງແຂວງ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົານັ້ນໄດ້ຮັບການຈັດຕັ້ງຜັນຂະຫຍາຍ ເຂົ້າໃນວຽກງານຕົວຈິງຢູ່ທ້ອງຖິ່ນຮາກຖານບ້ານ.

ໂອກາດດຽວກັນນັ້ນ, ຍັງໄດ້ຖືໂອກາດສຳຄັນດັ່ງກ່າວ ຮັບຟັງຄຳຄິດ, ຄຳເຫັນ, ຄຳສະເໜີຈາກພໍ່ແມ່ປະຊາຊົນຕໍ່ວຽກງານ ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງເມືອງ ແລະ ແຂວງ.

**(ຄຳດີ ພັນທະລີ)**



# ຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດ

(ສພຊ) ໃນວັນທີ 18 ພຶດສະພາ 2023 ສະພາປະຊາຊົນແຂວງວຽງຈັນ ໄດ້ເປີດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດປົກປ້ອງສັງຄົມແຫ່ງຊາດຂອງກຳມາທິການວັດທະນາທຳ-ສັງຄົມ ສະພາແຫ່ງຊາດ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ລຳໄມ ກູດລາວົງ ຮອງປະທານສະພາປະຊາຊົນແຂວງ, ທ່ານ ດຣ. ອິນປອນ ມະນີແສງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ, ຫົວໜ້າພະແນກສາທາລະສຸກ




ແຂວງວຽງຈັນ ແລະ ທ່ານ ນາງ ມະໄລສີ ທຳມະໂຄດ ຮອງປະທານສະພາປະຊາຊົນແຂວງ; ມີຄະນະກຳມະການ, ບັນດາພະແນກການຂອງແຂວງ ຕະຫຼອດຮອດວິຊາການພາຍໃນສະພາປະຊາຊົນແຂວງວຽງຈັນ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອຍົກສູງກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາວຽກງານການປະກັນສຸຂະພາບຕາມລະບົບປະກັນສັງຄົມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເປັນລະບົບ ມີປະສິດທິພາບ ໂດຍສະເພາະການສ້າງຫຼັກປະກັນສິດທິຂັ້ນພື້ນຖານຂອງຜູ້ອອກແຮງງານເວົ້າລວມ ເວົ້າສະເພາະແມ່ນການປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ທີ່ມີຕໍ່ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ໃຫ້ເຂົ້າເຖິງການບໍລິການປິ່ນປົວຢ່າງສະເໝີພາບທົ່ວເຖິງ ແລະ ຍຸຕິທຳ.

ກອງປະຊຸມແມ່ນຮັບຟັງການຂຶ້ນຜ່ານບົດລາຍງານວຽກງານການຕິດຕາມກວດກາໃນໄລຍະຜ່ານມາຂອງພະແນກສາທາ ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມຂອງແຂວງ ເຊິ່ງໄດ້ຍົກໃຫ້ເຫັນຈຳນວນສະຖິຕິສະມາຊິກປະກັນສັງຄົມ ແລະ ການປະຕິບັດນະໂຍບາຍຕ່າງໆຂອງສະມາຊິກປະກັນສັງຄົມ ມີທັງຂໍ້ສະດວກຫຼາຍດ້ານທີ່ຄວນສືບຕໍ່ຈັດຕັ້ງປະຕິບັດ ແລະ ມີທັງຂໍ້ຫຍຸ້ງຍາກທີ່ຈະຕ້ອງໄດ້ປັບປຸງແກ້ໄຂ. ພ້ອມນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ປະກອບຄຳເຫັນໃສ່ບົດລາຍງານດັ່ງກ່າວ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມສະດວກ, ວ່ອງໄວ ແລະ ມີປະສິດທິຜົນດີຍິ່ງໆຂຶ້ນ.



# 4 ແຂວງ ປະເມີນ ແລະ ຄົ້ນຄວ້າທາບທາມເນື້ອໃນກົດໝາຍວ່າດ້ວຍການຕິດຕາມກວດກາ




(ສພຊ) ເພື່ອຮັບປະກັນໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ການຈັດຕັ້ງປະຕິບັດໃຫ້ມີຄວາມຖືກຕ້ອງ ທັງເປັນການປະກອບສ່ວນໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ.

ໃນວັນທີ 24 ພຶດສະພາ 2023 ບັນດາເຂດເລືອກຕັ້ງຕ່າງໆທົ່ວປະເທດ ໄດ້ມີການຈັດກອງປະຊຸມປະເມີນ ແລະ ຄົ້ນຄວ້າທາບທາມເນື້ອໃນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຄື: ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ, ຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ຈັດກອງປະຊຸມດັ່ງກ່າວ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8, ປະທານສະພາປະຊາຊົນແຂວງ ແລະ ທ່ານ ພອນສຸກ ອິນທະວົງ ຮອງເຈົ້າແຂວງແຂວງຫົວພັນ ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ສອງກຳລັງ ປກຊ-ປກສ, ບັນດາສາຂາທະນາຄານ ແລະ ຄະນະຮັບຜິດຊອບພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ສະພາປະຊາຊົນແຂວງສາລະວັນ ໄດ້ຈັດຂຶ້ນຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຂອງຕົນ ພາຍໃຕ້ການເປັນປະທານຂອງທ່ານ ສີເຮັງ ຫອມສົມບັດ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີປະທານ-ຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງເຂົ້າຮ່ວມ.

ພ້ອມນັ້ນ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫຼວງນໍ້າທາ ໄດ້ຈັດຂຶ້ນພາຍໃຕ້ການເປັນປະທານຂອງທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງຫຼວງນໍ້າທາ; ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການຂອງແຂວງ, ສອງກຳລັງ ປກຊ-ປກສ ແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.




ກອງປະຊຸມໄດ້ປະເມີນ ແລະ ຄົ້ນຄວ້າປະກອບຄຳຄິດ, ຄຳເຫັນ ຕາມຄຳຖາມເຈາະຈີ້ມຂອງຄະນະຮັບຜິດຊອບຢ່າງກົງໄປກົງມາ ແລະ ເລິກເຊິ່ງ ເພື່ອເປັນຂໍ້ມູນສະໜອງໃຫ້ຄະນະຮັບຜິດຊອບປັບປຸງກົດໝາຍຂອງສະພາແຫ່ງຊາດນຳໄປປັບປຸງກົດໝາຍດັ່ງກ່າວ ໃຫ້ມີເນື້ອໃນເລິກເຊິ່ງ, ຮັດກຸມ, ຄົບຖ້ວນ ແທດເໝາະກັບສະພາບຄວາມເປັນຈິງ ກໍຄືສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນປັດຈຸບັນ ແລ້ວນຳສະເໜີເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະເປີດຂຶ້ນໃນມໍ່ໆນີ້ ສາມາດນຳໄປຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແມ່ນໄດ້ປັບປຸງຫຼ້າສຸດໃນຄັ້ງວັນທີ 15 ພະຈິກ 2016 ແລະ ໄດ້ລວມເຂົ້າກັນມາເປັນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ຜ່ານການຈັດຕັ້ງປະຕິບັດຜ່ານມາ ກົດໝາຍສະບັບດັ່ງກ່າວແມ່ນໄດ້ກາຍເປັນເຄື່ອງມື, ເປັນບ່ອນອີງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງສາມາດຈັດຕັ້ງເຄື່ອນໄຫວວຽກງານໄດ້ເປັນຢ່າງດີ ແຕ່ມາໃນສະພາແຫ່ງຊາດ ຊຸດທີ IX ໄດ້ຮັບການປັບປຸງກົງຈັກຕ່າງໆ ຈຶ່ງເຮັດໃຫ້ກົດໝາຍບາງມາດຕາຕ້ອງໄດ້ຮັບການປັບປຸງໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ ແລະ ຈຳເປັນໄດ້ຄົ້ນຄວ້າປະເມີນຜົນການຈັດຕັ້ງປະຕິບັດ ເພື່ອເປັນພື້ນຖານໃຫ້ແກ່ການທາບທາມການປັບປຸງກົດໝາຍດັ່ງກ່າວເປັນຕົ້ນແມ່ນໃນມາດຕາ 2 ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ, ມາດຕາ 7 ປະເພດການຕິດຕາມກວດກາ, ມາດຕາ 8 ຄວາມຮັບຜິດຊອບໃນການຕິດຕາມກວດກາ, ມາດຕາ 9 ການເຂົ້າຮ່ວມໃນການຕິດຕາມກວດກາ, ມາດຕາ 10 ການແກ້ໄຂຜົນຕິດຕາມກວດກາ; ສຳລັບການຕິດຕາມກວດກາຂອງສະພາແຫ່ງຊາດແມ່ນໃນມາດຕາ 19, ມາດຕາ 23 ແລະ ການຕິດຕາມກວດກາຂອງສະພາປະຊາຊົນຂັ້ນແຂວງໃນມາດຕາ 52, 54, 55, 60, 64,65,70 ທັງນີ້, ກໍເພື່ອເປັນພື້ນຖານໃນການທາບທາມຄວາມເຫັນໃຫ້ມີຄວາມກວ້າງຂວາງ ແລະ ເລິກເຊິ່ງ ເຊິ່ງຈະເຮັດໃຫ້ການຄົ້ນຄວ້າປັບປຸງກົດໝາຍໃນຄັ້ງນີ້ ໃຫ້ມີຄຸນນະພາບ ແລະ ສາມາດຈັດຕັ້ງປະຕິບັດໄດ້ໃນພຶດຕິກຳຕົວຈິງ.




ຕໍ່ມາໃນວັນທີ 26 ພຶດສະພາ, ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ ໂດຍ




ການເປັນປະທານຂອງທ່ານ ດົງເພັດ ພະຍົນ ປະທານສະພາປະຊາຊົນແຂວງເຊກອງ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ, ສະມາຊິກສະພາປະຊາຊົນແຂວງ, ສອງກຳລັງປະກອບອາວຸດ, ພະແນກການ, ອົງການ ແລະ ຂະແໜງການ ທີ່ກ່ຽວຂ້ອງເຂົ້າຮ່ວມ ກໍໄດ້ຈັດກອງປະຊຸມເພື່ອປະເມີນ ແລະ ຄົ້ນຄວ້າກົດໝາຍສະບັບດັ່ງກ່າວອີກດ້ວຍ.

**(ນັກຂ່າວ ສພຂ ຫົວພັນ, ສາລະວັນ, ຫຼວງນໍ້າທາ ແລະ ເຊກອງ).**

# ປະກາດຂໍ້ແຂ່ງຂັນ 4 ບຸກ ຂອງໜ່ວຍຮາກຖານຊາວໜຸ່ມສະພາປະຊາຊົນແຂວງ



(ສພຊ) ວັນທີ 29 ພຶດສະພາ 2023 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງ, ໜ່ວຍຮາກຖານຊາວໜຸ່ມ ສະພາປະຊາຊົນແຂວງເຊກອງ ໄດ້ປະກາດຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022 ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ແສງໂນພາ ມີກດາວົງ ຮອງເລຂາຄະນະບໍລິຫານງານຊາວໜຸ່ມປະຊາຊົນ ປະຕິວັດລາວ ແຂວງເຊກອງ, ສະຫາຍ ນາງ ຄຳເສັງ ທຸມມະວົງສາ ເລຂາຄະນະພັກຮາກຖານ, ຮອງປະທານສະພາປະຊາຊົນແຂວງ, ສະຫາຍ ໄຊແກ້ວ ລາດວົງສາ ເລຂາໜ່ວຍຮາກຖານຊາວໜຸ່ມສະພາປະຊາຊົນແຂວງ; ມີບັນດາຄະນະໜ່ວຍຮາກຖານຊາວໜຸ່ມ, ອົງການຈັດຕັ້ງສະຫະພັນກຳມະບານ, ອົງການຈັດຕັ້ງແມ່ຍິງ, ແຂກຖືກເຊີນ ຕະຫຼອດຮອດສະມາຊິກຊາວໜຸ່ມຮາກຖານສະພາປະຊາຊົນແຂວງເຂົ້າຮ່ວມ.

ໃນພິທີ, ສະຫາຍ ໄຊແກ້ວ ລາດວົງສາ ໄດ້ຂຶ້ນຜ່ານບົດສະຫຼຸບຜົນສຳເລັດການຈັດຕັ້ງປະຕິບັດຂະບວນການຂໍ້ແຂ່ງຂັນ 4 ບຸກ ປະຈຳປີ 2022 ເຊິ່ງໜ່ວຍຮາກຖານຊາວໜຸ່ມ ສະພາປະຊາຊົນແຂວງ ມີສະມາຊິກທັງໝົດ 26 ສະຫາຍ ຍິງ 12 ສະຫາຍ, ເຂົ້າເປັນສະມາຊິກພັກ ຈຳນວນ 20 ສະຫາຍ ຍິງ 10 ສະຫາຍ ໂດຍໃນໄລຍະ 1 ປີຜ່ານມາ ຄະນະໜ່ວຍຮາກຖານຊາວໜຸ່ມສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ຊີ້ນຳໆພາ ແລະ ເປັນເຈົ້າການຈັດຕັ້ງຜັນຂະຫຍາຍຂະບວນການ 4 ບຸກຕິດພັນກັບຂໍ້ແຂ່ງຂັນຮັກຊາດ ແລະ ພັດທະນາຢ່າງຈິງຈັງຕໍ່ເນື່ອງ ເຊິ່ງເຮັດໃຫ້ສະມາຊິກຊາວໜຸ່ມ ມີຄວາມເຊື່ອໝັ້ນຕໍ່ແນວທາງການເມືອງ ແລະ ການນຳພາ-ຊີ້ນຳຂອງພັກ-ລັດ, ຫ້າວຫັນຕື່ນຕົວໃນການປະຕິບັດໜ້າທີ່ວຽກງານວິຊາສະເພາະ, ເອົາໃຈໃສ່ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ; ນອກນີ້,ກໍໄດ້ເຂົ້າຮ່ວມຂະບວນການຕ່າງໆທີ່ແຂວງ ແລະ ກົມກອງຈັດຂຶ້ນ ແລະ ໄດ້ສ້າງກອງທຶນຂອງໜ່ວຍ; ມີຄອບຄົວຊາວໜຸ່ມຕົວແບບ ທີ່ໄດ້ສ້າງເສດຖະກິດຄອບຄົວ ເພື່ອສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເຊິ່ງເປັນຕົວແບບດ້ານກະສິກຳການປູກ-ການລ້ຽງ ແລະ ການບໍລິການຄ້າຂາຍຕ່າງໆ. ຜ່ານການຈັດຕັ້ງປະຕິບັດໄດ້ສາມາດຕີລາຄາໄດ້ໃນແຕ່ລະດ້ານຄື: ບຸກທາງດ້ານການເມືອງ-ແນວຄິດ ປະຕິບັດໄດ້ 91,70%, ບຸກດ້ານການຝຶກຝົນຫຼໍ່ຫຼອມ ແລະ ຊອກຮູ້ຮໍ່າຮຽນ ປະຕິບັດໄດ້ 90, 70%, ບຸກດ້ານວຽກງານການຈັດຕັ້ງປະຕິບັດໄດ້ 92%, ບຸກດ້ານອາຊີບ ແລະ ສ້າງວຽກເຮັດງານທຳປະຕິບັດໄດ້ 92,40%; ໄດ້ຈັດປະເພດແຂງ ມີ 24 ສະຫາຍ ຍິງ 11 ສະຫາຍ, ລະດັບກາງ ມີ 2 ສະຫາຍ ຍິງ 1 ສະຫາຍ.

ສະຫາຍ ແສງໂນພາ ມີກດາວົງ ໄດ້ຂຶ້ນມອບໃບຢັ້ງຢືນ 4 ບຸກໃຫ້ແກ່ກົມກອງ ແລະ ມອບໃບຍ້ອງຍໍ, ໃບຊົມເຊີຍໃຫ້ແກ່ສະມາຊິກຊາວໜຸ່ມ 4 ບຸກ ແລະ ກ່າວຮັບໂດຍສະຫາຍ ໄຊແກ້ວ ລາດວົງສາ ພ້ອມດ້ວຍສະມາຊິກພາຍໃນຮາກຖານດັ່ງກ່າວ.

ໂອກາດດັ່ງກ່າວ, ສະຫາຍ ແສງໂນພາ ມີກດາວົງ ໄດ້ສະແດງຄວາມຍ້ອງຍໍ, ຊົມເຊີຍຕໍ່ຜົນງານທີ່ຄະນະໜ່ວຍຮາກຖານຊາວໜຸ່ມສະພາປະຊາຊົນແຂວງ ທີ່ຍາດມາໄດ້ນັ້ນ, ສະມາຊິກຊາວໜຸ່ມທຸກສະຫາຍຕ້ອງຮັກສາມູນເຊື້ອອັນດີງາມເພື່ອເສີມຂະຫຍາຍເຂົ້າສູ່ການຈັດຕັ້ງປະຕິບັດວຽກງານຂໍ້ແຂ່ງຂັນ 4 ບຸກຂອງຊາວໜຸ່ມ ໃຫ້ມີຄວາມເຂັ້ມແຂງ ໂດຍຍຶດໝັ້ນຕໍ່ທິດນຳພາ-ຊີ້ນຳຂອງຄະນະພັກ, ຄະນະນຳຢ່າງຖືກຕ້ອງສອດຄ່ອງ. ເພື່ອເປັນການສືບຕໍ່ຮັກສາມູນເຊື້ອນາມມະຍົດ 4 ບຸກຂອງຊາວໜຸ່ມ ຄະນະໜ່ວຍຮາກຖານຊາວໜຸ່ມ ຈະຕ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ນຳພາ-ຊີ້ນຳຢ່າງໃກ້ຊິດ ຕິດແທດກັບສະມາຊິກຊາວໜຸ່ມໃນການສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ສະມາຊິກຊາວໜຸ່ມໄດ້ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ເອົາໃຈໃສ່ສຶກສາອົບຮົມທາງດ້ານການເມືອງ-ແນວຄິດໃຫ້ແກ່ສະມາຊິກຊາວໜຸ່ມ-ໄວໜຸ່ມ ໃຫ້ມີແນວຄິດອຸ່ນອ່ຽງ, ທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ເຕົ້າໂຮມຄວາມສາມັກຄີຂອງສະມາຊິກຊາວໜຸ່ມໃຫ້ເຂັ້ມແຂງ, ຮູ້ຈັກຈຳແນກມິດ, ສັດຕູຢ່າງຈະແຈ້ງ ແລະ ສະມາຊິກຊາວໜຸ່ມທຸກສະຫາຍຈົ່ງເອົາໃຈໃສ່ຈັດຕັ້ງປະຕິບັດສູ້ຊົນຢ່າງຮອບດ້ານທຸກວຽກງານທີ່ການຈັດຕັ້ງຂັ້ນເທິງມອບໝາຍ, ເອົາໃຈໃສ່ຕັ້ງໜ້າຝຶກຝົນຫຼໍ່ຫຼອມ ຄົ້ນຄ້ວາຮໍ່າຮຽນຍົກລະດັບຄວາມຮູ້, ຄວາມສາມາດ ໃນທຸກດ້ານ ໃຫ້ສູງເດັ່ນຂຶ້ນກວ່າເກົ່າ.

**(ມາລີວັນ)**




# ກົດໝາຍ ວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ

ຕໍ່ຈາກສະບັບກ່ອນ

**ມາດຕາ 55 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງທີ່ລະເມີດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມຕາມມາດຕາ 54 ຂອງກົດໝາຍສະບັບນີ້ແລ້ວ ແຕ່ຍັງສືບຕໍ່ກະທຳຜິດຊ້ຳ ຈະຖືກປັບໃໝຕາມແຕ່ລະກໍລະນີດັ່ງນີ້:

1. ປັບໃໝແຕ່ 10.000.000 (ສິບລ້ານ) ກີບ ຫາ 20.000.000 (ຊາວລ້ານ) ກີບ ສຳລັບ:

ກ. ເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ເປັນການລະເມີດມາດຕາ 43 ໃນຂໍ້ 1, 6, 7, 8, 9, 10, 11, 13, 14 ແລະ 15 ຂອງກົດໝາຍສະບັບນີ້ ມີມູນຄ່າທຽບເທົ່າຕ່ຳກວ່າ 10.000.000 (ສິບລ້ານ) ກີບ;

ຂ. ກຳນົດມູນຄ່າ, ຕິດປະກາດ ແລະ/ຫຼື ໂຄສະນາ ລາຄາສິນຄ້າ, ຄ່າບໍລິການ, ເງິນເດືອນ ຫຼື ຄ່າແຮງງານ ແລະ ຄ່າອື່ນ, ກຳນົດໂຄງສ້າງລາຄາສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ເປັນເງິນຕາຕ່າງປະເທດ;

ຄ. ໂຄສະນາ ແລະ/ຫຼື ປະກາດການບໍລິການແລກປ່ຽນເງິນຕາຕ່າງປະເທດ, ການຈັດຝຶກອົບຮົມ, ເຮັດການຕະຫຼາດກ່ຽວກັບເງິນຕາຕ່າງປະເທດ ທຸກຮູບແບບໂດຍຜ່ານຊ່ອງທາງຕ່າງໆທີ່ບໍ່ສອດຄ່ອງກັບກົດໝາຍສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງກັບທຸລະກຳເງິນຕາຕ່າງປະເທດ;

ງ. ກຳນົດ ແລະ ຕິດປະກາດ ອັດຕາແລກປ່ຽນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

ຈ. ປະຕິເສດການໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງໃນຄຸ້ມຄອງເງິນຕາຕ່າງປະເທດ.

2. ປັບໃໝ 10% (ສິບສ່ວນຮ້ອຍ) ຂອງມູນຄ່າທີ່ລະເມີດ ສຳລັບການເຄື່ອນໄຫວທຸລະກຳເງິນຕາຕ່າງປະເທດ ທີ່ເປັນການລະເມີດມາດຕາ 43 ໃນຂໍ້ 1, 6, 7, 8, 9, 10, 11, 13, 14 ແລະ 15 ຂອງກົດໝາຍສະບັບນີ້ ທີ່ມີມູນຄ່າທຽບເທົ່າແຕ່ 10.000.000 (ສິບລ້ານ) ກີບ ຂຶ້ນໄປ.

ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

**ມາດຕາ 56 (ໃໝ່) ມາດຕະການທາງບໍລິຫານອື່ນ**

ວິສາຫະກິດທີ່ຖືກປະຕິບັດ ມາດຕະການສຶກສາອົບຮົມ ແລະ ມາດຕະການປັບໃໝ ຕາມມາດຕາ 54 ແລະ 55 ຂອງກົດໝາຍສະບັບນີ້ແລ້ວ ແຕ່ຍັງມີການລະເມີດລະບຽບການກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ຈະຖືກປະຕິບັດມາດຕະການທາງບໍລິຫານອື່ນ ດັ່ງນີ້:

1. ໂຈະການອະນຸຍາດສົ່ງອອກ ສິນຄ້າ ແລະ ການບໍລິການ ໃນກໍລະນີທີ່ດຳເນີນທຸລະກຳຊຳລະຄ່າ ສິນຄ້າ ແລະ ການບໍລິການກັບຕ່າງປະເທດ ໂດຍບໍ່ຜ່ານບັນຊີເງິນຝາກສະເພາະ, ບໍ່ໂອນລາຍຮັບຈາກການສົ່ງອອກ ເຂົ້າມາ ສປປ ລາວ ຕາມກຳນົດເວລາ ຫຼື ບໍ່ຂາຍເງິນຕາຕ່າງປະເທດທີ່ໄດ້ຮັບຈາກການສົ່ງອອກໃຫ້ທະນາຄານທຸລະກິດຕາມລະບຽບການ;

2. ໂຈະການອະນຸຍາດນຳເຂົ້າສິນຄ້າ ແລະ ການບໍລິການ ໃນກໍລະນີທີ່ດຳເນີນທຸລະກຳຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ໂດຍບໍ່ຜ່ານບັນຊີເງິນຝາກສະເພາະ;

3. ບໍ່ໄດ້ຮັບການພິຈາລະນາຢັ້ງຢືນການນຳທຶນເຂົ້າ ສປປ ລາວ ໃນກໍລະນີທີ່ສະເໜີຂໍຢັ້ງຢືນການນຳທຶນເຂົ້າຊ້າກວ່າເວລາທີ່ທະນາຄານແຫ່ງ ສປປ ລາວ ກຳນົດ, ບໍ່ສະເໜີຂໍຢັ້ງຢືນ ຫຼື ບໍ່ລາຍງານການນຳເຂົ້າທຶນຄັ້ງຜ່ານມາ ໂດຍບໍ່ມີເຫດຜົນພຽງພໍ;

4. ໂຈະການໂອນເງິນອອກ ສປປ ລາວ ຫຼື ໂຈະການເຄື່ອນໄຫວທຸລະກຳທາງການເງິນຜ່ານລະບົບທະນາຄານ ໃນກໍລະນີທີ່ກູ້ຢືມເງິນຈາກຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ລາຍງານການເຄື່ອນໄຫວເງິນກູ້ຕາມລະບຽບການຂອງທະນາຄານແຫ່ງ ສປປລາວ;

5. ໂຈະການດຳເນີນທຸລະກິດ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 57 (ປັບປຸງ) ມາດຕະການທາງອາຍາ**

ບຸກຄົນ ແລະ ນິຕິບຸກຄົນ ລວມທັງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງມີອົງປະກອບຂອງການກະທຳຜິດທາງອາຍາ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ ແລະ ເງິນຕາ ຂອງ ສປປລາວ ຈະຖືກລົງໂທດຕາມປະມວນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

ນອກຈາກນີ້ ຖ້າບຸກຄົນ ແລະ/ຫຼື ນິຕິບຸກຄົນໃດທີ່ປັ່ນປ່ວນອັດຕາແລກປ່ຽນ ກໍໃຫ້ຖືເປັນການກະທຳຜິດທາງອາຍາເຊັ່ນກັນ.

**ມາດຕາ 58 (ໃໝ່) ການປັ່ນປ່ວນອັດຕາແລກປ່ຽນ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ປັ່ນປ່ວນອັດຕາແລກປ່ຽນ ດ້ວຍການສ້າງຂ່າວປອມ, ບິດເບືອນຂໍ້ມູນຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ, ກຳນົດອັດຕາແລກປ່ຽນ, ຊື້ ຂາຍ ເງິນຕາໂດຍບໍ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ, ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ ແລະ ເງິນຕາ ຂອງ ສປປ ລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາ ຫ້າປີ ແລະ ປັບໃໝ ແຕ່ 50.000.000 (ຫ້າສິບລ້ານ) ກີບ ຫາ 100.000.000 (ໜຶ່ງຮ້ອຍລ້ານ) ກີບ.

**ພາກທີ IX**

**ບົດບັນຍັດສຸດທ້າຍ**

**ມາດຕາ 59 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 60 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 1 ຕຸລາ 2022 ພາຍຫຼັງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ ລົງວັນທີ 22 ທັນວາ 2014.

**ປະທານສະພາແຫ່ງຊາດ**

**ປອ. ໄຊສົມພອນ ພົມວິຫານ**

## ວິທີເຮັດວຽກ




**ພາກທີ 4**

**ມາລະຍາດ ແລະ ຄຸນສົມບັດຂອງນັກປະຕິວັດ (ຕໍ່)**

**ຂ) ໜ້າທີ່ຂອງພະນັກງານ ແລະ ສະມາຊິກຂອງພັກ.**

1. ຕ້ອງນັບຖືຜົນປະໂຫຍດຂອງພັກຍິ່ງກວ່າສິ່ງໃດໆໝົດ ນອກຈາກຜົນປະໂຫຍດຂອງຊາດ, ຂອງບ້ານເມືອງ ແລະ ປະຊາຊົນແລ້ວ, ພັກເຮົາບໍ່ມີຜົນປະໂຫຍດອື່ນໃດໝົດ. ເພາະສະນັ້ນ ພັກຈຶ່ງຕ້ອງອອກແຮງຈັດຕັ້ງປະຊາຊົນນຳພາປະຊາຊົນ ເພື່ອປົດປ່ອຍປະຊາຊົນ ແລະ ເພື່ອຍົກລະດັບຄອງຊີບ, ລະດັບວັດທະນະທຳ, ການເມືອງຂອງປະຊາຊົນຂຶ້ນໃຫ້ສູງ ເພາະວ່າເມື່ອປະຊາຊົນທັງມວນຖືກປົດປ່ອຍແລ້ວ ກໍແປວ່າພັກເຮົາ ກໍຖືກປົດປ່ອຍແລ້ວເຊັ່ນກັນ.

ສະນັ້ນ, ສະມາຊິກຂອງພັກໝົດທຸກຄົນ ຕ້ອງເຂົ້າໃຈວ່າ ຜົນປະໂຫຍດສ່ວນຕົວ ເດັດຂາດຕ້ອງຂຶ້ນກັບຜົນປະໂຫຍດຂອງພັກ, ຜົນປະໂຫຍດແຕ່ລະພາກສ່ວນ ເດັດຂາດຕ້ອງຂຶ້ນກັບຜົນປະໂຫຍດຂອງທັງໝົດໝູ່, ຜົນປະໂຫຍດຊົ່ວຄາວ ເດັດຂາດຕ້ອງຂຶ້ນກັບຜົນປະໂຫຍດອັນຍາວນານ... ດັ່ງນັ້ນ, ໝາຍຄວາມວ່າ ຕ້ອງຍົກຜົນປະໂຫຍດຂອງພັກຂຶ້ນໝົດ, ຂຶ້ນສູງກວ່າໝູ່ໝົດ, ຂຶ້ນກ່ອນໝົດ, ເພາະວ່າຜົນປະໂຫຍດຂອງພັກ ແມ່ນຜົນປະໂຫຍດຂອງຊາດ, ຂອງປະເທດຊາດ ແລະ ຂອງປະຊາຊົນທັງມວນ.

ບໍ່ວ່າເວລາໃດ ບໍ່ວ່າວຽກການອັນໃດ ພະນັກງານ ແລະ ສະມາຊິກຂອງພັກ ຕ້ອງເອົາຜົນປະໂຫຍດຂອງພັກ ຂຶ້ນມາກ່ອນຜົນປະໂຫຍດສ່ວນຕົວຂຶ້ນຕາມຫຼັງ: ນັ້ນແມ່ນຫຼັກການອັນສູງສົ່ງຂອງພັກ, ນັ້ນແມ່ນສະຕິຕໍ່ພັກ.

ອ່ານຕໍ່ສະບັບໜ້າ...

SCNG
SOMCHAYNEUK GROUP




# ຂາຍກາກບອນໃນປ່າໄມ້

\# ທິດດີ

ຫາກເວົ້າເລື່ອງທ່າແຮງໃນການພັດທະນາເສດຖະກິດຢູ່ປະເທດເຮົາແມ່ນມີຫຼາຍຂະແໜງການປົ່ມຊ້ອນ...ແຕ່ກໍຕ້ອງຍອມຮັບວ່າ ປັດຈຸບັນນີ້ຂະແໜງພັດທະນາພະລັງງານໄຟຟ້າ ແລະ ຂຸດຄົ້ນບໍ່ແຮ່ມາແຮງຫຼາຍ.

ຫຼາຍປີກ່ອນ ຜູ້ຂຽນເຄີຍຂຽນບົດໃນຫົວຂໍ້: ທ່າແຮງຂອງປະເທດເຮົາ ໃນການຂາຍກາກບອນ... ເຊິ່ງເປັນສິນຄ້າຊະນິດໜຶ່ງຈາກປ່າໄມ້ ໂດຍບໍ່ໄດ້ທຳລາຍປ່າໄມ້ ຫຼື ສະພາບແວດລ້ອມໃດໆ ສິນຄ້ານີ້ ຫຼາຍປະເທດໃນໂລກ ໂດຍສະເພາະປະເທດໃນກຸ່ມອາຊຽນເພິ່ນກໍຂາຍກັນແລ້ວ? ສິນຄ້ານີ້ຂາຍສະບາຍ ເພາະມັນບໍ່ບູດ; ບໍ່ເນົ່າ; ບໍ່ມີການຂົນສົ່ງ; ບໍ່ມີການເຝົ້າຍາມ; ບໍ່ມີສາງເກັບມ້ຽນ...ໄດ້ລາຄາພໍໃຈກໍຂາຍ ບໍ່ພໍໃຈກໍປະໄວ້? ເພາະຕະຫຼາດກວ້າງຂວາງ.

ຂາຍກາກບອນໃນປ່າໄມ້ແມ່ນຂາຍຫຍັງ? ຂາຍການສະສົມທາດແຂງກາກບອນໃນຕົ້ນໄມ້...ເວົ້າແບບງ່າຍໆແມ່ນຕົ້ນໄມ້ດູດເອົາກາສໂບນິກໃນອາກາດ (CO2) ມາສັງເຄາະເປັນອາຫານ ແລະ ຜະລິດອົກຊີແຊນປ່ອຍສູ່ອາກາດ (O2). ໃນຂະບວນການສັງເຄາະນີ້ ຍັງມີ ກາສໂບນິກ ເຫຼືອຢູ່ ເຊິ່ງຕົ້ນໄມ້ໄດ້ນຳໄປເກັບໄວ້ໃນພື້ນດິນຜ່ານລະບົບຮາກ ພາກສ່ວນນີ້ລະ ຄືການສະສົມທາດແຂງກາກບອນ ເອົາໂຕນີ້ລະໄປຂາຍ.

ເມື່ອເວົ້າເຖິງການຊື້ຂາຍກ່ອນອື່ນຂໍຍົກໃຫ້ເຫັນແນວຄວາມຄິດຈາກນັກວິທະຍາສາດສິ່ງແວດລ້ອມທີ່ເວົ້າເຖິງ "ການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ" ເຊິ່ງເກີດຈາກການທຳລາຍປ່າໄມ້ ແລະ ຄວາມຊຸດໂຊມຂອງປ່າໄມ້ໃນປະເທດພວມພັດທະນາ ແລະ ດ້ອຍພັດທະນາ ເປັນຂໍ້ສະເໜີເລີ່ມຕົ້ນຂອງປະເທດ ປາປົວນິວກີເນ ແລະ ໂກສຕາຣິກາ ໃນປີ 2005 ໃນກອງປະຊຸມພາຄີສົນທິສັນຍາຂອງອົງການສະຫະປະຊາຊາດ ວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດ ຄັ້ງທີ 11 ທີ່ເມືອງມົງເຕຣອານ ປະເທດການາດາ ໂດຍສືບຕໍ່ແນວຄວາມຄິດຂອງນັກວິທະຍາສາດສິ່ງແວດລ້ອມ ໃນຊຸມປີ 1990 ເຊິ່ງຖືເປັນໂຄງຮ່າງການຮ່ວມມືໂດຍມີຊື່ວ່າ: Reducing Emission From Deforestation and Degradation in Developing Countries: REDD.

ຂໍ້ສະເໜີຂອງສອງປະເທດນັ້ນ ມີຮ່າງກົນໄກການຫຼຸດຜ່ອນການທຳລາຍປ່າໄມ້ ເຊິ່ງກໍໄດ້ຮັບການສະໜັບສະໜູນຈາກປະເທດສະມາຊິກ ແລະ ແນວຄວາມຄິດດັ່ງກ່າວ ໄດ້ຮັບຄວາມຈະແຈ້ງຍິ່ງຂຶ້ນ ໃນກອງປະຊຸມຄັ້ງທີ 13 ທີ່ເມືອງບາຫຼີ ປະເທດອິນໂດເນເຊຍ ປີ 2007; ກອງປະຊຸມເທື່ອນີ້ໄດ້ກຳນົດກົນໄກໃນການຈັດຕັ້ງປະຕິບັດຂອງ REDD.

REDD ເປັນໂຄງຮ່າງການຮ່ວມມືລະຫວ່າງປະເທດໃນຮູບແບບໃໝ່ ເຊິ່ງມີຄວາມຈຳເປັນຍ້ອນວ່າການຕັດໄມ້ທຳລາຍປ່າເປັນການປ່ອຍອາຍພິດຫຼາຍກວ່າພາກສ່ວນອື່ນໆ ໄປສູ່ຊັ້ນບັນຍາກາດໂລກ. ຖ້າເຮົາບໍ່ສາມາດຢຸດຢັ້ງໄດ້ ເຮົາກໍບໍ່ສາມາດຫຼຸດຜ່ອນສະພາວະໂລກຮ້ອນໄດ້ເຊັ່ນກັນ.

ນອກຈາກຈະຫຼຸດຜ່ອນການປ່ອຍອາຍພິດແລ້ວ ພາຍໃຕ້ REDD ນີ້ ປະເທດອຸດສາຫະກຳ (Industrialized Nations) ຕ່າງໆ ຍັງຕ້ອງຈ່າຍເງິນເພື່ອສະໜັບສະໜູນປະເທດພວມພັດທະນາ ແລະ ປະເທດດ້ອຍພັດທະນາ ໃຫ້ສາມາດຮັກສາເນື້ອທີ່ປ່າໄມ້ໄວ້ໃຫ້ຍືນຍົງ. ແຕ່ກ່ອນເນື້ອທີ່ປ່າໄມ້ຈະມີມູນຄ່າ ກໍຕໍ່ເມື່ອມີການຕັດຕົ້ນໄມ້ເພື່ອນຳໄປຂາຍ ຫຼື ເປັນເດີ່ນແປນຂາຍທີ່ດິນທໍ່ນັ້ນ ແຕ່ດຽວນີ້ ປະເທດໃດສາມາດຫຼຸດປະລິມານການປ່ອຍອາຍພິດເຮືອນແກ້ວ ທີ່ມີຜົນຈາກການຕັດໄມ້ທຳລາຍປ່າລວມໄປເຖິງປະເທດທີ່ສາມາດຮັກສາເນື້ອທີ່ປ່າໄມ້, ປູກປ່າໄມ້ເພີ່ມຂຶ້ນ ກໍສາມາດໄດ້ຮັບເງິນ ມີລາຍໄດ້ເປັນກອບເປັນກຳ ຈາກຈຳນວນປະລິມານກາກບອນທີ່ສະສົມເປັນທາດແຂງໃນພື້ນດິນ.

ການສະສົມກາກບອນເປັນທາດແຂງໃນພື້ນດິນນັ້ນ ຄືສິນຄ້າທີ່ຈະຕ້ອງຂາຍສູ່ຕະຫຼາດ ເຊິ່ງປະເທດອຸດສາຫະກຳ ຕ້ອງເປັນຜູ້ຊື້ນັ້ນ; ການຊື້ຂາຍແມ່ນດຳເນີນຕາມຂັ້ນຕອນ ໂດຍເລີ່ມຈາກການສຳຫຼວດປ່າໄມ້ ຈາກນັ້ນປະເມີນປະລິມານກາກບອນ-ກວດຜ່ານການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ (ຊ່ຽວຊານຈາກຕ່າງປະເທດ; REDD) ແລ້ວກໍກາຍເປັນສິນຄ້າ (ສາມາດຂາຍໄດ້ໂລດ) ໝາຍຄວາມວ່າຂາຍເຈ້ຍໃບດຽວ.

ສຳລັບຕະຫຼາດນີ້ ແມ່ນປະເທດອຸດສາຫະກຳ (ປະເທດທີ່ຈະເລີນແລ້ວ) ເປັນຜູ້ຊື້ໂດຍມີສອງຮູບແບບ ຄື:

ອັນທີ 1: ຕະຫຼາດແບບສະໝັກໃຈ (ພໍໃຈຊື້) ເຊິ່ງສ່ວນຫຼາຍ ແມ່ນບໍລິສັດຂ້າມຊາດ (ບໍລິສັດທີ່ປ່ອຍກາກບອນອອກຫຼາຍ) ເພາະຖືກລັດຖະບານບັງຄັບໃຫ້ປັບປຸງຂະບວນການຜະລິດໃນໂຮງງານ ຫຼຸດຜ່ອນການປ່ອຍກາກບອນ ການປັບປຸງນີ້ ສິ້ນເປືອງງົບປະມານຫຼາຍ ສະນັ້ນ, ເຂົາຈຶ່ງຊື້ເອົາດີກວ່າ.

ອັນທີ 2: ຕະຫຼາດແບບບັງຄັບ ໂດຍປະເທດອຸດສາຫະກຳ ຕ້ອງມີພັນທະຫຼຸດຜ່ອນພາວະໂລກຮ້ອນ ຕາມສົນທິສັນຍາກຽວໂຕ ປີ 1997 ໝາຍວ່າ ປະເທດດັ່ງກ່າວ ຕ້ອງຫຼຸດຜ່ອນໃຫ້ໄດ້ 5% ໃນປີ 2012 ໂດຍເອົາມາດຖານຂອງປີ 1990 ເປັນບ່ອນອີງ.

ປະເທດເຮົາມີເນື້ອທີ່ປ່າໄມ້ຫຼາຍສົມຄວນ ໂດຍສະເພາະເຂດຈັດສັນເປັນປ່າສະຫງວນແຫ່ງຊາດ ສະນັ້ນ, ເຮົາກໍມີຄວາມສາມາດເປັນໜຶ່ງໃນຜູ້ຂາຍກາກບອນ ສ້າງລາຍຮັບໄດ້ສູງ ຄືປະເທດອື່ນໆ ໃນໂລກເຊັ່ນດຽວກັນ.

ການຂາຍກາກບອນນີ້ມັນເປັນໄປໄດ້ໃນທຸກໆເນື້ອທີ່ປ່າໄມ້. ດັ່ງນັ້ນ, ມັນຈຶ່ງເໝາະສົມທີ່ສຸດກັບແນວທາງການພັດທະນາຊົນນະບົດຢູ່ປະເທດເຮົາ ເພາະພວກເຮົາມີປ່າສະຫງວນ; ປ່າຊຸມຊົນ; ສວນປູກຕົ້ນໄມ້ອຸດສາຫະກຳແບບຄອບຄົວ. ເມື່ອນັ້ນ, ລາຍຮັບຂອງປະຊາຊົນລາວບັນດາເຜົ່າຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກເພີ່ມຂຶ້ນຢ່າງແນ່ນອນ.

ຂັ້ນຕອນກໍບໍ່ຍາກ ເຮັດຕາມຂະບວນການຂອງ REDD ຄືໄດ້ກ່າວມາເບື້ອງຕົ້ນນັ້ນ, ບາງຄົນອາດຕັ້ງຄຳຖາມວ່າ: ໄດ້ເງິນມາແລ້ວຊິແບ່ງປັນແນວໃດ? ຕາມແນວຄວາມຄິດຂອງ REDD ເຂົາຈະຖືສຳຄັນຄວາມຄິດຄວາມເຫັນຂອງຊຸມຊົນ ທີ່ມີສ່ວນໃນການປົກປັກຮັກສາປ່າໄມ້; ຜູ້ຊື້ກາກບອນ ເຂົາຈະມີອົງການກວດສອບ ເບິ່ງຄວາມໂປ່ງໃສໃນການນຳໃຊ້ເງິນ ທີ່ໄດ້ມາຈາກການຂາຍກາກບອນ ໂດຍເຂົາຖືສຳຄັນການພັດທະນາຊຸມຊົນ.

ສະນັ້ນ, ຈຶ່ງເຫັນວ່າ ທ່າແຮງຂອງປະເທດ ໃນການຂາຍກາກບອນເປັນສິນຄ້ານີ້ ມັນສອດຄ່ອງກັບແນວທາງຂອງພັກເຮົາ ໃນການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ. ຊົນນະບົດຮັ່ງມີ ປະຊາຊົນບັນດາເຜົ່າຮັ່ງມີ ປະເທດຊາດມັ່ງຄັ່ງເຂັ້ມແຂງ ສີວິໄລກ້າວໄປ ສ້າງສາພັດທະນາປະເທດເຮົາຕາມຈຸດໝາຍສັງຄົມນິຍົມ.

ປັດຈຸບັນ ຢູ່ປະເທດເຮົາການຈັດຕັ້ງກ່ຽວຂ້ອງເພິ່ນກໍມີໂຄງການແລ້ວ, ມີບາງບໍລິສັດກໍເລີ່ມຂາຍແລ້ວ ແຕ່ວ່າຍັງບໍ່ທັນເປັນຂະບວນການແຂງແຮງ ໂດຍສະເພາະແມ່ນປະຊາຊົນໂດຍທົ່ວໄປ ຍັງບໍ່ທັນເຂົ້າເຖິງໂຄງການດັ່ງກ່າວ ແລະ ສ້າງລາຍຮັບຈາກການຂາຍກາກບອນຢ່າງກວ້າງຂວາງ. ຂໍຝາກເປັນບັ້ງເລກນໍ?

# ທີ່ດິນ

\#ດອກຫຍ້າ

ທີ່ດິນ ເປັນພື້ນຖານເງື່ອນໄຂຕັດສິນການຄົງຕົວ ແລະ ຂະຫຍາຍຕົວຂອງຊາດ ແລະ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດລາວ; ໃນການພັດທະນາເສດຖະກິດ-ສັງຄົມ ທີ່ດິນຍັງເປັນຊັບພະຍາກອນອັນລ້ຳຄ່າ, ເປັນພາຫະນະ ແລະ ເປັນປັດໄຈຕົ້ນຕໍຂອງການຜະລິດ, ເປັນທ່າແຮງ ແລະ ເປັນແຫຼ່ງທຶນອັນໃຫຍ່ຫຼວງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ເຊິ່ງມີຄວາມຈຳເປັນຕ້ອງມີການຄຸ້ມຄອງ, ຂຸດຄົ້ນ, ນຳໃຊ້ໃຫ້ເກີດປະໂຫຍດສູງສຸດໃຫ້ແກ່ລັດ ແລະ ປະຊາຊົນ.

ລັດ ໃນຖານະເປັນຕົວແທນ ປະຕິບັດສິດເປັນເຈົ້າກຳມະສິດຂອງວົງຄະນະຍາດແຫ່ງຊາດ ດຳເນີນການຄຸ້ມຄອງທີ່ດິນຢ່າງລວມສູນ ເປັນເອກະພາບໃນທົ່ວປະເທດ ໂດຍຕິດພັນກັບການດຳເນີນຈັດສັນ, ວາງແຜນການນຳໃຊ້ ແລະ ພັດທະນາ, ການມອບສິດນຳໃຊ້ໃຫ້ບຸກຄົນ, ນິຕິບຸກຄົນ, ຄອບຄົວ, ລວມໝູ່ ແລະ ການຈັດຕັ້ງນຳໃຊ້ທີ່ດິນຢ່າງຍາວນານ ແລະ ໝັ້ນຄົງ ໂດຍສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ.

ທີ່ດິນ ຕ້ອງໄດ້ຮັບການຈັດສັນໃຫ້ສົມເຫດສົມຜົນ ແລະ ນຳໃຊ້ຖືກກັບເປົ້າໝາຍ, ປະຢັດມັດທະຍັດ ແລະ ມີປະສິດທິຜົນສູງ, ຮັບປະກັນຜົນປະໂຫຍດສະເພາະໜ້າ ແລະ ຍາວນານ, ປົກປັກຮັກສາສິ່ງແວດລ້ອມ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດຕາມທິດສີຂຽວ ແລະ ຍືນຍົງ, ຍົກສູງຄຸນນະພາບທີ່ດິນ ແລະ ຮັບປະກັນທີ່ດິນສຳລັບກະສິກຳ ເພື່ອຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ.

ນະໂຍບາຍ, ກົດໝາຍກ່ຽວກັບທີ່ດິນ ຕ້ອງປະກອບສ່ວນສ້າງສະຖຽນລະພາບທາງການເມືອງ-ສັງຄົມ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຄຸ້ມຄອງ, ນຳໃຊ້ທ່າແຮງຈາກທີ່ດິນໃຫ້ເກີດປະໂຫຍດສູງສຸດ ເພື່ອພັດທະນາປະເທດຊາດ, ຜົນປະໂຫຍດຂອງຜູ້ນຳໃຊ້ທີ່ດິນ ລວມທັງຜົນປະໂຫຍດຂອງນັກລົງທຶນ, ການຈັດຕັ້ງລວມໝູ່, ນິຕິບຸກຄົນ ແລະ ບຸກຄົນ ຢ່າງສົມເຫດສົມຜົນ ໂດຍຮັບຮູ້ສິດນຳໃຊ້ທີ່ດິນ, ພັດທະນາທີ່ດິນ ຕິດພັນກັບການເອື້ອອຳນວຍໃຫ້ແກ່ການພັດທະນາຕະຫຼາດອະສັງຫາລິມະຊັບ ລວມທັງຕະຫຼາດທີ່ດິນ ເພື່ອສົ່ງເສີມການພັດທະນາທີ່ດິນຢ່າງແຂງແຮງ ຕາມກົນໄກເສດຖະກິດຕະຫຼາດ ທີ່ມີການດັດສົມຕາມກົດໝາຍ ແລະ ຮັບປະກັນຕາມທິດສັງຄົມນິຍົມ; ລັດນຳໃຊ້ບັນດາເຄື່ອງມືກ່ຽວກັບລາຄາ, ພາສີ, ອາກອນ ໃນການຄຸ້ມຄອງທີ່ດິນ ຢ່າງມີປະສິດທິຜົນ ແນໃສ່ຈຳກັດ ແລະ ແກ້ໄຂສະພາບການນຳໃຊ້ທີ່ດິນແບບຟຸມເຟືອຍ, ການຈັບຈອງຄຸ້ມຄອງທີ່ດິນໂດຍບໍ່ມີການພັດທະນາ ກໍຄືການແກ້ໄຂປາກົດການຫຍໍ້ທໍ້ຕ່າງໆ ຈາກການພັດທະນາ ແລະ ນຳໃຊ້ທີ່ດິນ.

ສົ່ງເສີມບົດບາດຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ປະຊາຊົນ ເຂົ້າຮ່ວມໃນການຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ນິຕິກຳອື່ນໆ ທີ່ຕິດພັນກັບທີ່ດິນ ພ້ອມທັງສົ່ງເສີມສິດເປັນເຈົ້າ ແລະ ການເຂົ້າຮ່ວມໂດຍກົງຂອງປະຊາຊົນ ໃນການຄຸ້ມຄອງທີ່ດິນຕາມລະບຽບກົດໝາຍ.

ກົງຈັກການຈັດຕັ້ງ ແລະ ລະບົບການຄຸ້ມຄອງ-ບໍລິຫານທີ່ດິນ ຕ້ອງໃຫ້ສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະ, ຮັບປະກັນການຄຸ້ມຄອງທີ່ດິນໃຫ້ມີຄວາມເປັນເອກະພາບລວມສູນ ແລະ ແບ່ງຂັ້ນຄຸ້ມຄອງໃຫ້ຈະແຈ້ງ, ມີກົນໄກ, ລະບຽບການທີ່ຮັດກຸມ ແລະ ມີງົບປະມານ, ວັດຖຸອຸປະກອນຮັບໃຊ້ພຽງພໍ ເຂົ້າໃນການຄຸ້ມຄອງທີ່ດິນ.

ຄຸ້ມຄອງທີ່ດິນ ໃຫ້ເຂັ້ມງວດຕາມກົດໝາຍ ຖືເອົາວຽກງານຕິດຕາມກວດກາ ເປັນວຽກປົກກະຕິ ໂດຍໃຫ້ມີການຕິດຕາມກວດກາຢ່າງແທດເຖິງ; ອັນທີ່ກວດກາແລ້ວ ຜົນຂອງການກວດກາໄດ້ຮັບການແກ້ໄຂຢ່າງເຂັ້ມງວດ, ເດັດຂາດ ເພື່ອສະກັດກັ້ນປະກົດການຫຍໍ້ທໍ້ໃນຂົງເຂດວຽກງານທີ່ດິນ.



# ຊຸບຄຳລາວໃຫ້ຖືກ

\#ຄູແສງ

ພາສາລາວ ແລະ ພາສາໄທ ມີຄຳສັບໃຊ້ຮ່ວມກັນເປັນຈຳນວນຫຼວງຫຼາຍ, ແຕ່ໃນນັ້ນມີຈຳນວນໜຶ່ງ ທີ່ພາສາລາວນອກຈາກເປັນຄຳສັບທີ່ໃຊ້ຮ່ວມກັບພາສາໄທແລ້ວ ກໍຍັງມີຄຳສະເພາະຂອງຕົນ ດັ່ງຕົວຢ່າງຕໍ່ໄປນີ້:

| ຄຳລາວ | ຄຳໄທ |
|---|---|
| ຄິດ - ຄຶດ | คิด |
| ຈິ່ງ - ຈຶ່ງ | จึง |
| ເຊິ່ງ - ຊຶ່ງ | ซึ่ง |
| ຊ່ອຍ - ຊ່ວຍ | ช่วย |
| ທໍ່ - ເທົ່າ | เท่า |
| ເຝິກ - ຝຶກ | ฝึก |
| ເມິກ - ມຶກ (ໝຶກ) | หมึก |
| ຫຼິ້ນ - ເຫຼັ້ນ | เล่น |



## ສຸກສະບາຍຫາຍໂຣຄາ

# ຮ້ອນໃນ



**ໂດຍ: ສາວແວ່ນ**

ບາດແຜຮ້ອນໃນ ຫຼື ບາດໃນປາກ ທີ່ເຮັດໃຫ້ແສບ ທຸກເທື່ອທີ່ຮັບປະທານອາຫານ ຫຼືນັ່ງຢູ່ເສີຍໆກໍຮູ້ສຶກທໍລະມານກັບການແສບຂອງມັນ ເຊິ່ງຜູ້ຂຽນເຊື່ອວ່າຫຼາຍທ່ານກໍອາດຈະເຄີຍເປັນມາແລ້ວ ພ້ອມທັງຮັບຮູ້ເຖິງຄວາມທໍລະມານຂອງມັນເປັນຢ່າງດີ ບາງທ່ານອາດຈະເປັນເລື້ອຍໆ ແລະ ບາງທ່ານອາດຈະບໍ່ມັກເປັນ ຫຼື ບໍ່ເຄີຍເປັນເລີຍກໍມີ; ສະນັ້ນ, ໃນຄໍລຳສຸກສະບາຍຫາຍໂຣຄາສະບັບນີ້, ເຮົາມີສາເຫດ ແລະ ວິທີປິ່ນປົວບາດແຜຮ້ອນໃນ ມານຳສະເໜີ ໃຫ້ແກ່ບັນດາທ່ານໄດ້ຮັບຮູ້ນຳກັນ.

ບາດແຜຮ້ອນໃນ ຫຼື ບາດແຜໃນປາກ ແມ່ນອາການທີ່ເນື້ອເຍື່ອອ່ອນໃນປາກມີການອັກເສບ ບາງເທື່ອອາດເປັນການອັກເສບທີ່ເລິກ ເຊິ່ງສາມາດເປັນໄດ້ທົ່ວປາກ ເປັນຕົ້ນລີ້ນ, ເພດານປາກ, ເຫືອກ... ເຊິ່ງມາຈາກສາເຫດລຸ່ມນີ້:

- ພູມຄຸ້ມກັນຮ່າງກາຍມີການປ່ຽນແປງ ເຊັ່ນ ໄລຍະທີ່ເປັນປະຈຳເດືອນ ຮໍໂມນຮ່າງກາຍມີການປ່ຽນແປງ;
- ການຕອບສະໜອງຕໍ່ແບັກທີເຣຍໃນປາກ;
- ມີເຊື້ອໄວຣັດ;
- ມີບັນຫາກ່ຽວກັບພູມຕ້ານທານ ຫຼື ຂາດວິຕາມິນ ແລະ ແຮ່ທາດບາງຊະນິດ;
- ຄວາມຕຶງຄຽດສະສົມ;
- ດື່ມນ້ຳໜ້ອຍເກີນໄປ;
- ພັກຜ່ອນບໍ່ພຽງພໍ;
- ມີບາດແຜຈາກການກັດ ຫຼື ການສຽດສີຈາກແຂ້ວປອມທີ່ຫຼົມ ຫຼື ເຫຼັກດັດແຂ້ວ ທີ່ບໍ່ພໍດີກັບແຂ້ວ;

**ວິທີປິ່ນປົວ**

- ປ້ວນປາກດ້ວຍນ້ຳເກືອທຸກໆ 2 ຊົ່ວໂມງ ຫຼື ຫຼັງຈາກກິນອາຫານທຸກຄັ້ງ ແລະ ຫຼີກລ່ຽງນ້ຳຢາປ້ວນປາກທີ່ມີສ່ວນປະສົມຂອງທາດເຫຼົ້າ;
- ເລືອກຮັບປະທານອາຫານທີ່ກິນງ່າຍ, ຫຍ້ຳງ່າຍ ແລະ ຍ່ອຍງ່າຍ ຫຼີກລ່ຽງອາຫານທີ່ມີຣົດຊາດສົ້ມ, ເຜັດ, ເຄັມ, ຮ້ອນໂພດ-ເຢັນໂພດ ແລະ ຢຸດການກະທຳທີ່ເປັນການທຳຮ້າຍປາກ ເຊັ່ນ: ສູບຢາ, ກິນເຫຼົ້າ ຫຼື ຄ້ຽວໝາກ;
- ພະຍາຍາມ ບໍ່ໃຫ້ໂຕເອງເຄັ່ງຄຽດຫຼາຍ, ກິນນ້ຳໃຫ້ຫຼາຍ, ພັກຜ່ອນໃຫ້ພຽງພໍ ແລະ ອອກກຳລັງກາຍເປັນປະຈຳ;
- ຫາກເກີດບາດແຜຮ້ອນໃນ ທີ່ຮູ້ສຶກວ່າໃຫຍ່ເກີນໄປ ຫຼື ເຮັດທຸກຢ່າງແລ້ວແຕ່ບໍ່ດີຂຶ້ນ ຄວນໄປພົບແພດ ເພື່ອປິ່ນປົວ.

**ຂໍ້ມູນຈາກ: www.sanook.com**

## ອາດ ກະວີລາວ

# ສຽງສະອື້ນ

**ໂດຍ: ລູກທາດສາມປາງ**

| | |
|---|---|
| ❈ ຄາວກ່ອນດົງດ່ານໄມ້ | ແດນປ່າຍູງຍາງ |
| ກາງພະນາເຂົາຂຽວ | ມັ່ງມູນແນວໄມ້ |
| ສັດເພິ່ງພາອາໄສຊີ້ນ | ໄພສິນດົງໃຫຍ່ |
| ສາຍທານໄຫຼຮ່ອງນ້ຳ | ປາເຕົ້າອັ່ງຫຼາຍ |

| | |
|---|---|
| ❈ ມີມາກມາຍກ່າຍກຸ້ມ | ສັດປ່າເນືອງນອງ |
| ຮ້ອງຄັບໄພສາລິກາ | ຄື້ນມາກັງວານກ້ອງ |
| ເຕັ້ນຈ່ອງເຄືອລີງນ້ອຍ | ຊະນີງອຍແຂນງ່າ |
| ສັກກຸນາຂໍ່ຂຸ້ມ | ກະຊຸມອ້ຽງພ່ອງກາ |

| | |
|---|---|
| ❈ ມີໝູໝາໄກ່ເໜັ້ນ | ງູລີ່ນກະເລັນກວາງ |
| ຫຼວງຫຼາຍຟານເຍືອງໝູ | ໝູ່ກະແຕງົວມ້າ |
| ເຕັມປ່າຄວາຍເສືອຊ້າງ | ເມີຍໝີອົ້ນມັ່ງ |
| ຄັບຄັ່ງແລນບ່າງເຕັ້ນ | ຮຽວໄມ້ດູ່ແຄນ |

| | |
|---|---|
| ❈ ດຽວນີ້ແປນເປົ່າຮ້າງ | ຜືນປ່າຄວນກະສັນ |
| ແສນລຳພັນຄົນຮອນ | ກົ່ນຖາງຜານໄມ້ |
| ພົງໄພໜາສູນສ້ຽງ | ລຽນລຳຕໍ່າ |
| ຄົນທຳລາຍຜ່າກ້ຽງ | ສຽງສະອື້ນປ່າຄວນ |

| | |
|---|---|
| ❈ ມວນໝູ່ສັດໃຫຍ່ນ້ອຍ | ຫຼາຍສ່ຳໂຫຍຫວນ |
| ໄຫ້ຮ່ຳຄວນອຶດຫິວ | ຫ່ວງເຮືອນຮັງຊິ້ນ |
| ສິນລະວົນຕາຍແລ້ງ | ໂຮຍແຮງຂາດປ່າ |
| ປາເຫີນວັງຫ່ຽວແຫ້ງ | ເຂີນນ້ຳໄຂວ່ຕາຍ |

| | |
|---|---|
| ❈ ສັດທັງຫຼາຍວິ່ງໄຫວ້ | ຄົນຊ່ວຍເຫັນໃຈ ແດ່ທ້ອນ |
| ພົງໄພຍູງຍາງລວມ | ຮ່ວມສັດວອນເວົ້າ |
| ຂໍທ່ານເຊົາຕັດໄມ້ | ເຫັນໃຈຂ້ານ້ອຍແນ່ |
| ຖູນຄອມໄຣດູ່ແຕ້ | ວອນໄຫວ້ໝູ່ຄົນ |

| | |
|---|---|
| ❈ ມະນຸດເອີຍ ຂ້າຂໍເນົາເພິ່ງຊີ້ນ | ນຳແດ່ໂລກາ |
| ຂໍອາໄສເມືອງຄົນ | ຈ່ອງຝົນລົງຟ້າ |
| ຊ່ວຍສັດສາຄຶງດ້າວ | ປະຄອງດິນເຢັນຊຸ່ມ |
| ຊຸມຂ້ອຍເປັນປ່າໄມ້ | ຂໍໄວ້ຢ່າກົ່ນຮອນ ມະນຸດເອີຍ |






## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສາວຈົ້ມ

❈ ***ຜ່ານ***ພົ້ນໄປ ສຳລັບວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ ***ບັນຍາກາດຟົດຟື້ນ*** ຄືບໍ່ເຄີຍ ສັງຄົມ ປຸກລະດົມ***ສາມັກຄີ*** ປູກແນວພັນໄມ້ ປູກໃສ່ທົ່ວລະບົບພື້ນ ***ຄືນຄວາມຊຸ່ມຊື່ນ*** ອີກບໍ່ນານຄົງພຶກຟື້ນ ຜືນພະນາປ່າກວ້າງ ຊຽວກະຈີໄດ້ດັ່ງເດີມ ***ທ່ານເອີຍ!***

❈ ***ທະ***ນາຄານແຫ່ງ ສປປ ລາວ ປະກາດສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດ ***ຢ່າງເປັນທາງການ*** ຊົມເຊີຍ! ເພາະຖືວ່າ ***"ກິນພອມຮ້ອນ-ຟ້ອນຍາມເມົາ"*** ເນື່ອງຈາກສະພາບເດັ່ນຮ້ອນ ໃນຍຸກປັດຈຸບັນ ຄືບັນຫາເງິນຕາ ***ຄ່າເໜັງຕີງເລື້ອຍ*** ຂໍໃຫ້ຈິງຈັງແກ້ ຈັບເງິນເຂົ້າແຫຼ່ງ ຄອງຄຸ້ມລາຍຮັບພ້ອມ ຕິດຕາມເລື່ອງຮົ່ວໄຫຼ ***ຊອບແລ້ວ!***

## ຊອບຍິ້ມ

\# ແອ່ນຕຸ້ງ

### ເລື່ອງ: ການປຽບທຽບ

ໃນຊົ່ວໂມງຮຽນວິຊາພູມສາດ ສາວຄູຖາມນັກຮຽນວ່າ ທະວີບອາເມລິກາ ກັບດວງຈັນ ແມ່ນຫຍັງໄກກວ່າກັນ?

ທ້າວ ເອບ ຍົກມືຂຶ້ນແລ້ວຕອບວ່າ:

- ທະວີບອາເມລິກາໄກກວ່າ
- ເປັນຫຍັງຈຶ່ງວ່າແນວນັ້ນ?
- ເພາະວ່າເດືອນ ນ້ອງຫລຽວເຫັນເກືອບທຸກຄືນ ແຕ່ທະວີບອາເມລິກາ ບໍ່ເຄີຍເຫັນຈັກເທື່ອ
- ???



## ຄະຕິເຕືອນໃຈ

\#ດອກຫຍ້າ

ມີຄ່າເທົ່າໜວດກຸ້ງ ສະດຸ້ງຈົບເຮືອນສັ່ນ




# ກົກເຄົ້າ ພາສາລາວ

"ໄດ້ຍິນເຂົາເວົ້າວ່າ ພາສາລາວ ມາຈາກພາສາປາລີ-ສັນສະກິດ ແມ່ນແທ້ຫວາ, ລຸງຄຳ?"

"ໃຜວ່າ? ພາສາລາວ ກະມາຈາກພາສາລາວເດີມ ທີ່ມີເຄົ້າກຳເນີດມາຈາກພາສາຕະກຸນໄຕ ຕວ່າ!"

"ແມ່ນຫວາ? ຫຼານຍັງບໍ່ເຂົ້າໃຈຄັກປານໃດ. ອະທິບາຍສູ່ຫຼານຟັງຄັກໆເບິ່ງດູ໋, ລຸງ!"

"ໄດ້ຕວ່າ! ຕັ້ງໃຈຟັງດີໆ ເດີ!"

ໃນໄລຍະຜ່ານມາ ພວກເຮົາມັກຫຼົງໄປວ່າ ກົກເຄົ້າຂອງພາສາລາວ ແມ່ນມາຈາກພາສາປາລີ ສັນສະກິດ ກໍຍ້ອນໃນເວລາເຮົາຮຽນໄວຍາກອນລາວ ພາກວະຈີວິພາກ ໃນເອກະສານຈະສະເໜີກ່ຽວກັບຄຳເຄົ້າ ເຊິ່ງໄດ້ແບ່ງອອກເປັນຄຳເຄົ້າລາວເດີມ, ຄຳເຄົ້າລາວ ທີ່ໄດ້ມາຈາກພາສາປາລີ-ສັນສະກິດ ແລະ ຄຳເຄົ້າທີ່ຢືມມາຈາກພາສາອື່ນໆ. ຈາກຈຸດນີ້ ຈຶ່ງພາໃຫ້ພວກເຮົາຫຼົງກັນ ລະຫວ່າງຄຳວ່າ "ຄຳເຄົ້າລາວ" ແລະ "ພາສາລາວ". ຈາກບ່ອນນີ້ ຈຶ່ງເຮັດໃຫ້ພວກເຮົາຈຳນວນໜຶ່ງ ຫຼົງຈາກວະລີທີ່ວ່າ "ຄຳເຄົ້າລາວ ທີ່ມາຈາກພາສາປາລີ-ສັນສະກິດ" ມາເປັນປະໂຫຍກ "ເຄົ້າພາສາລາວ ມາຈາກພາສາປາລີ-ສັນສະກິດ" ເຊິ່ງຖືວ່າເປັນຄວາມເວົ້າທີ່ຜິດພາດ.

ພວກເຮົາຕ້ອງເຂົ້າໃຈວ່າ ພາສາລາວ ແລະ ພາສາປາລີ-ສັນສະກິດ ແມ່ນຢູ່ໃນຄົນລະຕະກຸນພາສາ. ພາສາລາວ ນອນຢູ່ໃນຕະກູນພາສາໄຕ ກະໄດ ເຊິ່ງເປັນພາສາຄຳໂດດ, ສ່ວນພາສາປາລີ-ສັນສະກິດ ສັງກັດຢູ່ໃນຕະກຸນພາສາອິນໂດ-ເອີຣົບ ເຊິ່ງເປັນພາສາຜັນປ່ຽນຄຳດັ່ງດຽວກັບພາສາຝຣັ່ງ-ອັງກິດ-ເຢຍລະມັນ-ຣັດເຊຍ ເວົ້າງ່າຍໆ ກໍແມ່ນພາສາທີ່ມີການແຈກຄຳກິລິຍາ (Conjugaison)... ລະບົບສຽງ ແລະ ຫຼັກໄວຍາກອນ ກໍແຕກຕ່າງຢ່າງຂາດຂັ້ນ.

ພາສາປາລີ-ສັນສະກິດ ມາກ່ຽວພັນກັບພາສາລາວ ກໍມີພຽງແຕ່ຄຳສັບເທົ່ານັ້ນ ໝາຍຄວາມວ່າ ຊາວລາວເຮົາໄດ້ຢືມເອົາຄຳສັບຈາກພາສາປາລີ-ສັນສະກິດ ມາເພີ່ມໃສ່ຄັງສາງຄຳສັບຂອງພາສາລາວ ຄືດັ່ງພວກເຮົາຢືມເອົາຄຳສັບພາສາຝຣັ່ງ-ອັງກິດ ມາເພີ່ມໃສ່ພາສາພວກເຮົາໃນປັດຈຸບັນ ແຕ່ການຢືມນັ້ນ ບໍ່ແມ່ນເຮົາຈະເອົາມາໃຊ້ ແລະ ອອກສຽງຄືກັນກັບຄຳເດີມຂອງພາສາເຫຼົ່ານັ້ນອ້ອຍຕ້ອຍ ເຮົາໄດ້ມີການປັບປ່ຽນໃຫ້ສອດຄ່ອງກັບສຽງສຳນຽງຂອງລາວເຮົາ ແລະ ບາງເທື່ອກໍມີການແປງຄຳໃຫ້ມີລັກສະນະໃກ້ຄຽງກັບສຽງພາສາລາວເດີມ ເຊັ່ນ Nagara नगर (ນະຄະຣະ) ເຮົາກໍປ່ຽນມາເປັນ "ນະຄອນ", Tantrī तन्त्री (ຕັນຕຣີ ) ເຮົາກໍປ່ຽນມາເປັນ "ດົນຕີ", Padesa पदेस (ປະເທສະ) ເຮົາກໍປ່ຽນມາເປັນ "ປະເທດ" ດັ່ງນີ້ເປັນຕົ້ນ. ພ້ອມດຽວກັນນັ້ນ ກໍໄດ້ຢືມວິທີສ້າງຄຳຈາກພາສາປາລີ-ສັນສະກິດມານຳໃຊ້ ເຊັ່ນ ສະໝາດ, ສິນທິ ເປັນຕົ້ນ.

ດັ່ງນັ້ນ ຖ້າພວກເຮົາເວົ້າວ່າ "ພາສາລາວມີຄຳເຄົ້າທີ່ມາຈາກພາສາປາລີ-ສັນສະກິດເປັນຈຳນວນຫຼວງຫຼາຍ" ຖືວ່າຖືກຕ້ອງ.




**ການເວົ້າຈາອ່ອນຫວານ ແລະ ມີສົມມາຄະລະວະ ຂອງຜູ້ສູງສັກຕໍ່ຄົນເຄິ່ງຢ່າງເຮົາ ນັ້ນວ່າ ເປັນບາລະມີເຫລືອຫລາຍແລ້ວ.**




# ອົດສະຕຣາລີ ປະກາດຂຶ້ນຄ່າແຮງງານຂັ້ນຕ່ຳ 15,34 ໂດລາຕໍ່ຊົ່ວໂມງ



ອີງຕາມການລາຍງານຂ່າວເມື່ອວັນທີ 3 ມິຖຸນາຜ່ານມາ ໃຫ້ຮູ້ວ່າ: ລັດຖະບານອົດສະຕຣາລີ ໄດ້ປະກາດຂຶ້ນຄ່າແຮງງານຂັ້ນຕ່ຳ 5,75% ມີຜົນບັງຄັບແຕ່ວັນທີ 1 ກໍລະກົດ 2023 ເປັນຕົ້ນໄປ ດ້ວຍເຫດຜົນສັ້ນໆວ່າ: ລັດຖະບານມີຄວາມເຂົ້າໃຈວ່າແຕ່ລະຄອບຄົວຕ້ອງຕໍ່ສູ້ຕໍ່ຄ່າຄອງຊີບທີ່ເພີ່ມສູງຂຶ້ນ ແລະ ເອກະຊົນຕ້ອງແບກຮັບຄ່າໃຊ້ຈ່າຍພະນັກງານຍຸກໃໝ່. ຂະນະທີ່ທັງ 3 ລັດໃຫຍ່ກຽມຮັບມືຄ່າໄຟຟ້າປັບສູງຂຶ້ນ 25% ທ່າມກາງສຽງສະທ້ອນຂອງນັກເສດຖະສາດທີ່ກັງວົນວ່າ: ຕົ້ນທຶນເຫຼົ່ານີ້ຈະກະທົບເຖິງການຕັດສິນໃຈດຳເນີນນະໂຍບາຍຂອງທະນາຄານກາງ.

ອັດຕາເງິນເຟີ້ທົ່ວໂລກກຳລັງເລັ່ງຂຶ້ນສູ່ລະດັບສູງສຸດໃນຮອບຫຼາຍທົດສະວັດ ລວມທັງອາເມຣິກາ ແລະ ອັງກິດ ເອີ້ນໄດ້ວ່າສູງທີ່ສຸດໃນຮອບ 40 ປີ ເຊິ່ງອົດສະຕຣາລີກໍເຊັ່ນກັນ, ແຕ່ລະປະເທດຈຶ່ງມີຄວາມຈຳເປັນຕ້ອງຂຶ້ນຄ່າແຮງງານເພື່ອຮັກສາຄ່າຄອງຊີບ.

ລາຍງານໃຫ້ຮູ້ຕື່ມວ່າ: ຄະນະກຳມາທິການການງານຍຸຕິທຳ (Fair Work Commission: FWC) ເຊິ່ງເປັນອົງກອນອິດສະຫຼະໃນການເບິ່ງແຍງແຮງງານອົດສະຕຣາລີ ເປີດເຜີຍວ່າ: ລັດຖະບານຈະຂຶ້ນຄ່າແຮງງານຂັ້ນຕ່ຳ 5,75% ໂດຍພະນັກງານທີ່ໄດ້ຮັບຄ່າແຮງງານຕ່ຳສຸດຈະໄດ້ຮັບ 22,61 ໂດລາອົດສະຕຣາລີຕໍ່ຊົ່ວໂມງ (15,34 ໂດລາສະຫະລັດ) ຈະໃຫ້ມີຜົນບັງຄັບແຕ່ວັນທີ 1 ກໍລະກົດ 2023 ເປັນຕົ້ນໄປ ໂດຍຄາດວ່າຈະມີຜົນຕໍ່ລາຍໄດ້ແຮງງານທົ່ວປະເທດຫຼາຍກວ່າ 2 ລ້ານຄົນ.

ຄະນະກຳມາທິການການງານຍຸຕິທຳ ລະບຸວ່າ: ການຂຶ້ນຄ່າແຮງງານຄັ້ງນີ້ຜ່ານການພິຈາລະນາຈາກທຸກຝ່າຍ ແລະ ຈະບໍ່ເຮັດໃຫ້ເກີດ ຫຼື ມີສ່ວນເຮັດໃຫ້ລາຄາຄ່າແຮງງານເພີ່ມສູງຂຶ້ນ ເມື່ອທຽບໃສ່ປີຜ່ານມາທີ່ປັບຢູ່ລະດັບ 5,2%.

ເຖິງຢ່າງໃດກໍຕາມ, ສຽງສະທ້ອນຈາກນັກເສດຖະສາດກັງວົນວ່າ: ການຂຶ້ນຄ່າແຮງງານໃຫ້ສອດຄ່ອງກັບອັດຕາເງິນເຟີ້ 7% ອາດສ້າງເກນມາດຕະຖານສຳລັບການຄາດຄະເນຄ່າແຮງງານອື່ນໆ ສິ່ງຜົນກະທົບຕໍ່ການພິຈາລະນາຂອງທະນາຄານກາງອົດສະຕຣາລີ ຫລື RBA ໃນການຄວບຄຸມອັດຕາເງິນເຟີ້ໃຫ້ກັບໄປສູ່ໄລຍະເປົ້າໝາຍ 2-3%.




#ກາລິບເບ

## ປາ

ໃນຄຳສັບທີ່ວ່າ "ປາ" ຖ້າວ່າເປັນພາສາລາວ ກໍໝາຍເຖິງປາຢູ່ໃນນ້ຳເຊັ່ນ: ປາດຸກ. ປາຄໍ່. ປາກະເດີດ ແລະ ປາອື່ນໆ ປະເພດປາໃຫຍ່ກໍມີປາຄ້າວ. ປາເຄິງ. ປາບຶກ ແລະ ອື່ນໆ...

ໃນຄຳວ່າ "ປາ" ສັບນີ້ ຖ້າເປັນພາສາ ຝຣັ່ງ ກໍຈະແປວ່າ "ພໍ່" ໃນຄຳສັບທີ່ວ່ານີ້ ເລີຍກາຍເປັນພາສາສົນ ເພາະຄົນລາວສ່ວນໜຶ່ງ ໃນບັນດາລູກໆ ເອີ້ນພໍ່ຂອງຕົນວ່າ "ປາ" ຫຼື "ອີປາ" ຊຶ່ງໝາຍເຖິງພໍ່ຜູ້ບັງເກີດເກົ້າ ນັ້ນເອງ ນີ້ແມ່ນການເອົາພາສາຝຣັ່ງມາໃຊ້ ເພື່ອໃຫ້ເດັກນ້ອຍລືມຄຳວ່າ "ພໍ່" ທີ່ເປັນພາສາລາວ.

ມີພວກເດັກນັກຮຽນຮ່ວມຫຼິ້ນນຳກັນໃນເດີ່ນໜ້າໂຮງຮຽນ ເວລາເລີກຮຽນ ລໍໃຫ້ພໍ່ແມ່ມາຮັບ ແຕ່ມີບັນຫາເກີດຂຶ້ນ ເມື່ອພໍ່ຂອງນັກຮຽນມາຮັບໃນບາງພວກ ເມື່ອລູກໆເຫັນພໍ່ໄປຮັບລູກກັບເຮືອນ ເມື່ອລູກໆແນມເຫັນພໍ່ມາຮັບກໍດີໃຈ ແລະ ຮ້ອງຂຶ້ນແຮງໆວ່າ "ປາມາແລ້ວ" ຜູ້ມາຮັບນັ້ນ ແມ່ນຄົນແທ້ໆ ແລະ ບໍ່ແມ່ນປາແມ່ນແຕ່ໜ້ອຍ. ອີກປະການໜຶ່ງ ພວກເດັກໆບາງສ່ວນ ເຂົ້າໃຈວ່າ ມີຄົນກີ່ປາມານຳ ເພື່ອເຂົ້າມາຂາຍໃນໂຮງຮຽນ ແຕ່ບໍ່ເປັນຈັ່ງວ່າ ເພາະຜູ້ເຂົ້າມານັ້ນ ແມ່ນພໍ່ຂອງນັກຮຽນ.

ອີກປະການໜຶ່ງ ຜູ້ຂຽນເອງໄປຫຼິ້ນນຳເພື່ອນຄົນໜຶ່ງ ແຕ່ບໍ່ພົບເພື່ອນຄົນນັ້ນ ເພາະເຂົາບໍ່ທັນໄດ້ເລີກການ ຈຶ່ງໄດ້ພົບແຕ່ລູກໆຂອງເພື່ອນ ສະນັ້ນ. ຕົນເອງຈຶ່ງໄດ້ນັ່ງລໍຖ້າ ປະມານ 10 ນາທີກໍເລີຍຫຼຽວເຫັນເພື່ອນຜູ້ນັ້ນກັບມາແຕ່ການ ໃນຂະນະທີ່ເຂົາກຳລັງຍ່າງເຂົ້າຮົ້ວເຮືອນມານັ້ນ ພວກລູກໆຂອງເຂົາ ກໍຫຼຽວເຫັນພໍ່ກຳລັງເຂົ້າມາ ພວກລູກໆເຫຼົ່ານັ້ນ ຈຶ່ງຮ້ອງໄປໃສ່ວ່າ "ປາມາແລ້ວ" ຂ້າພະເຈົ້າ ຜູ້ນັ່ງລໍຖ້າ ກໍຄິດໃນໃຈວ່າ "ບ່າ ຊິໄດ້ກິນລາບປານຳເພື່ອນມື້ນີ້ລະ" ເພາະຄິດໃນໃຈວ່າ ເພື່ອນຄົນນັ້ນ ກີ່ປາມານຳ ແຕ່ເມື່ອເຂົາເຂົ້າໄປເຖິງເຮືອນແລ້ວ ເຫດການບໍ່ເປັນດັ່ງຄິດ ເພາະເຂົາບໍ່ໄດ້ກີ່ປາມາພໍໂຕ ເຂົາຈຶ່ງບອກກັບຂ້າພະເຈົ້າວ່າ "ເດັກນ້ອຍຮ້ອງວ່າ ປາມາແລ້ວນັ້ນ ມັນບໍ່ແມ່ນປາໃນນ້ຳ ...ໃດສ່ຽວ ມັນແມ່ນເຮົາເອງນີ້ລະ ຍ້ອນພວກລູກໆເອີ້ນເຮົາຜູ້ເປັນພໍ່ວ່າ "ປາປາ" ນັ້ນເອງ ຂ້າພະເຈົ້າ ຈຶ່ງຄິດໃນໃຈວ່າ "ອີຫີ! ເລື່ອງແນວນີ້ ກໍຊ່າງມີ ຣີ! ພໍ່ແທ້ໆກໍວ່າ ປາ.

ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ເຫດຮ້າຍ ທີ່ກະທົບຕໍ່ສິດທິຂອງເດັກ

ໃນບັນຍາກາດວັນເດັກນ້ອຍສາກົນ (1 ມິຖຸນາ) ປີນີ້ ຄໍລຳ "ເບິ່ງໄວ້ໄດ້ບົດຮຽນ" ໄດ້ແກະເອົາບາງເລື່ອງຈາກຂ່າວຕ່າງປະເທດ ທີ່ເວົ້າກ່ຽວກັບບັນຫາທີ່ເດັກໆໄດ້ປະສົບພົບພໍ້ມາ ແລະ ເບິ່ງວ່າບັນຫາເຫຼົ່ານັ້ນໄດ້ຮັບການແກ້ໄຂຢ່າງໃດ. ຂໍເລີ່ມຈາກບັນຫາການແຕ່ງດອງແຕ່ຍາມເຍົາໄວຂອງເດັກ ເຊິ່ງອົງການອຸຍນິເຊບ (UNICEF) ໄດ້ສ້າງແຜນງານໄວ້ແຕ່ປີ 2016 ພຸ້ນວ່າ ຈະຕ້ອງກຳຈັດບັນຫາການແຕ່ງດອງຂອງເດັກໃຫ້ໝົດໄປ. ແຜນງານນັ້ນໄດ້ເລັ່ງຊ່ວຍເຫຼືອເດັກຍິງອາຍຸລະຫວ່າງ 14-19 ປີໃນທົ່ວໂລກ ບໍ່ໃຫ້ຕົກເປັນເຫຍື່ອການບີບບັງຄັບ, ການຂົ່ມຂູ່ໃຫ້ແຕ່ງດອງ ຫຼື ແຕ່ງດອງດ້ວຍເງື່ອນໄຂກົດດັນອື່ນໆ. ນອກຈາກນັ້ນ, ແຜນງານຍັງໄດ້ເນັ້ນໃຫ້ການຊ່ວຍເຫຼືອເດັກຍິງໃນໄວນີ້ທີ່ແຕ່ງດອງໄປແລ້ວໃນ 12 ປະເທດທົ່ວໂລກ ໃນນັ້ນ ໜັກໜ່ວງກວ່າໝູ່ແມ່ນຢູ່ໃນປະເທດບັງກາລະເທດ, ເອຕິໂອປີ, ເນປານ ແລະ ເຢຍລະມັນ. ການເລືອກປະເທດທີ່ເປັນຈຸດສຸມໃນການຊ່ວຍເຫຼືອນັ້ນແມ່ນອີງໃສ່ຕົວຊີ້ບອກຫຼາຍຢ່າງ ລວມທັງອັດຕາການແຕ່ງດອງຂອງເດັກຍິງທີ່ມີຈຳນວນຫຼວງຫຼາຍ. ຢູ່ປະເທດ**ກົວເຕມາລາ** (ໃນອາເມລິກາກາງ) ນັ້ນ ເມື່ອປະມານ 8 ປີຜ່ານມາ ທາງການກໍໄດ້ປະກາດໃຊ້ກົດໝາຍທີ່ກຳນົດອາຍຸຕ່ຳສຸດເປັນ 18 ປີ ສຳລັບການແຕ່ງດອງຂອງທັງຊາຍ ແລະ ຍິງ ເຊິ່ງເມື່ອກ່ອນນັ້ນແມ່ນ 16 ປີສຳລັບເພດຊາຍ ແລະ 14 ປີສຳລັບເພດຍິງ. ກົດໝາຍໄດ້ກຳນົດຂໍ້ຍົກເວັ້ນທີ່ອະນຸຍາດໃຫ້ເພດຍິງອາຍຸ 16 ປີ ສາມາດສ້າງຄອບຄົວໄດ້ໃນບາງກໍລະນີຈຳເປັນ ແຕ່ຕ້ອງໄດ້ຮັບອະນຸຍາດຢ່າງເປັນທາງການຈາກອົງການສານ. ເປັນອັນວ່າພາຍໃຕ້ກົດໝາຍສະບັບດັ່ງກ່າວ ທຸກໆການແຕ່ງດອງຂອງຊາຍ-ຍິງ ທີ່ມີອາຍຸຕ່ຳກວ່າ 18 ປີນັ້ນ ຈະຖືກຖືວ່າເປັນຮູບແບບການຂົ່ມຂືນ. ສາເຫດການປັບຂຶ້ນເກນອາຍຸຂອງຜູ້ມີສິດແຕ່ງດອງໃນກົວເຕມາລາ ມາຈາກຂໍ້ມູນທີ່ຊີ້ບອກວ່າໃນປະເທດນີ້ ມີເດັກຍິງ-ຊາຍ ອາຍຸລະຫວ່າງ 15-19 ປີ ແຕ່ງດອງກັນປະມານ 4.000 ຄູ່ຕໍ່ປີ ແລະ ເດັກຍິງອາຍຸລະຫວ່າງ 10-14 ປີທີ່ຖືພາຫຼັງຈາກການແຕ່ງດອງ ຫຼື ຖືພານອກສົມລົດນັ້ນ ມີສູງເຖິງ 4.700 ຄົນຕໍ່ປີ. ຂ່າວ ຈາກ ກົວເຕມາລາ ຫວ່າງບໍ່ດົນນີ້ໃຫ້ຮູ້ວ່າ, ໃນ 7 ປີຫຼັງ ຈາກການປະກາດໃຊ້ກົດໝາຍປັບຂຶ້ນເກນອາຍຸແຕ່ງດອງ, ບັນຫາການແຕ່ງດອງແບບ "ສຸກກ່ອນເຫັ່ມ" ໄດ້ຫຼຸດລົງຢ່າງໜ້າພໍໃຈ. ຈາກບັນຫາການແຕ່ງດອງລະຫວ່າງເດັກ, ຂໍກ້າວມາໃສ່ເລື່ອງເຫດຮ້າຍທີ່ເກີດຂຶ້ນກັບເດັກ ຍ້ອນການກະທຳຂອງຜູ້ໃຫຍ່ ໂດຍສະເພາະແມ່ນຜູ້ເປັນພໍ່-ແມ່ ຫຼື ຜູ້ປົກຄອງຂອງເດັກເອງ ເຊັ່ນ ໃນລະຫວ່າງປີ 2016 ແມ່ໃຈໂຫດທີ່ເປັນຄົນອົດສະຕຣາລີຊື່ນາງແຄຣີແອນຄອນລີ ໄດ້ຂັງລູກສາວຂອງຕົນເອງໄວ້ໃນລົດເປັນເວລາ 9 ຊົ່ວໂມງໃນຄວາມຮ້ອນກວ່າ 60 ອົງສາ. ລູກສາວນ້ອຍທັງສອງ, ຜູ້ເອື້ອຍຊື່ ດາຊີ ອາຍຸ 2 ປີເຄິ່ງ ແລະ ຜູ້ນ້ອງຊື່ ຈາໂລແອນ ອາຍຸ 13 ເດືອນ ແລະ ໄດ້ເສຍຊີວິດລົງຍ້ອນທົນຄວາມຮ້ອນບໍ່ໄດ້. ແມ່ໃຈໂຫດຖືກກັກຂັງເພື່ອດຳເນີນຄະດີ. ພໍຮອດເດືອນພະຈິກ 2019, ທາງສານໄດ້ຂໍ້ມູນຄວາມຜິດຢ່າງຄົບຖ້ວນຈຶ່ງໄດ້ຕັດສິນໃຫ້ນາງ ແຄຣີແອນຄອນລີ ມີໂທດຕິດຄຸກເປັນເວລາ 9 ປີ, ແຕ່ເນື່ອງຈາກນາງຖືກກັກຂັງເພື່ອ ດຳເນີນຄະດີມາແລ້ວ 3 ປີ ນາງຈຶ່ງອາດມີສິດຖືກພິຈາລະນາໃຫ້ໄດ້ຮັບອະໄພຍະໂທດໃນເດືອນ ພະຈິກ ປີໜ້າ ( 2024).

**ຢູ່ປະເທດຍີ່ປຸ່ນ** ກໍມີເຫດການແມ່ໃຈໂຫດຈົງໃຈຂ້າລູກສາວອາຍຸພຽງ 8 ເດືອນເທົ່ານັ້ນ. ເຫດເກີດຂຶ້ນເມື່ອເກືອບ 8 ປີຜ່ານມາແລ້ວ (Vientiane Times 14/8/2018) ຄືເກີດຂຶ້ນໃນວັນທີ 13 ມັງກອນ 2018. ແມ່ໃຈໂຫດຄົນນັ້ນຊື່ວ່າ ນາງ ອາຊຸກະ ກາມິກຸໂບະ ໄດ້ຈົງໃຈເອົາລູກສາວໄປຖິ້ມໄວ້ຢູ່ຫ້ອງນ້ຳເປັນເວລາ 20 ຊົ່ວໂມງໃນອາກາດເດືອນມັງກອນທີ່ແສນເຢືອກເຢັນແຕ່ເດັກຄົນນັ້ນມີພຽງຜ້າຢາງປົກຫຸ້ມຮ່າງກາຍ. ເດັກເກີດມີຕຸ່ມແດງໂພງເຕັມໂຕແຕ່ກໍ່ລອດຕາຍ. ຕໍ່ມາອີກສອງວັນ, ນາງ ອາຊຸກະ ພ້ອມດ້ວຍລູກຊາຍ ອາຍຸ 2 ປີ ແລະ ລູກສາວນ້ອຍທີ່ລອດຕາຍໄດ້ເດີນທາງໄປຢາມຜູ້ເປັນແມ່ຢູ່ນະຄອນຫຼວງໂຕກຽວ. ຜູ້ເປັນແມ່ສັງເກດເຫັນສະພາບຜິດປົກກະຕິຂອງຫຼານສາວນ້ອຍຈຶ່ງໄດ້ໄປປຶກສາກັບສູນເບິ່ງແຍງສຸຂະພາບຂອງເດັກ. ສຸດທ້າຍເລື່ອງກໍຖືກເປີດເຜີຍ ນາງ ອາຊຸກະ ໄດ້ສາລະພາບຜິດ ແລະ ວ່ານາງເຮັດໄປຍ້ອນບໍ່ມີຄວາມສາມາດໃນການລ້ຽງດູ ແລະ ວ່ານາງບໍ່ມີຄວາມຮັກລູກຄົນນີ້ຈັກດີ້. ສຸດທ້າຍເດັກຍິງຜູ້ເຄາະຮ້າຍຖືກສົ່ງເຂົ້າໄປລ້ຽງຢູ່ສູນສົງເຄາະ. ຂ່າວບໍ່ໄດ້ເວົ້າເຖິງການລົງໂທດຕໍ່ຜູ້ເປັນແມ່ໃຈໂຫດ.




## ມັນແມ່ນຄວາມຄິດຂອງໃຜ?

*#ບ່າວກະບື*

ຕອບກິຕ່ອກ ແລະ ເມຍຊື່ຜາດີ ໄປຮອດຄິວລົດສາຍເໜືອ ກໍພໍດີແຕ່ທັນໄດ້ເຫັນລົດບັດເຄື່ອນອອກໄປ.

ກິຕ່ອກ ເວົ້າສຽງຮ້າຍໆໃສ່ເມຍວ່າ: "ຄັນເຈົ້າຟ້າວແດ່ເລັກນ້ອຍ ລົດກໍຄົງສິບໍ່ໄປປະດອກ". ຝ່າຍນາງເມຍຕອບຄືນວ່າ: "ຖ້າເຈົ້າຫາກບໍ່ຊຸ່ນຊຽວໂພດ ພວກເຮົາກໍຄົງຈະບໍ່ເສຍເວລາດົນໆ ເພື່ອຖ້າລົດຄັນໜ້າດອກ".

## WHOSE FAULT ?

*# BAOKBU*

Kytok and his wife Phadee arrived at the Northern bus terminal only to see the bus pulling out.

"If you had hurried a litle bit, we would not have missed the bus, said Kytok angrily.

"And if you hadn't made me hurry so much we wouldn't have to wait so long for the next," replied his wife.

ອ່ານມ່ວນ ຊວນຍິ້ມ




ເດັກນ້ອຍໃນວັນນີ້ ຄືຜູ້ໃຫຍ່ໃນວັນໜ້າ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ :**
ທ່ານ ສີງຄຳ ວົງພະຈັນ

**ຄະນະຊົ່ງອຊານທີ່ປຶກສາ :**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຄະນະບັນນາທິການ :**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ :**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ :**
ນາງ ນິດຕາ ຄຸນປາກດີ